# ພຣະທັມເນເຫມີຢາ


| | | | | | | |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| 8 | 9 | 10 | 11 | 12 | 13 | |


## ເນເຫມີຢາ

## NEHEMIAH

### 1 ຄຳອ້ອນວອນຂອງເນເຫມີ ເພື່ອກຸງເຢຣູຊາເລັມ

Nehemiah Prays fro His People

1 ຖ້ອຍຄຳຂອງເນເຫມີ ບຸດຮາກາລີຢາ  ຢູ່ມາໃນເດືອນຄີສເລວ (Chis’lev) ໃນປີທີຊາວ ຂນະທີ່ຂ້າພະເຈົ້າຢູ່ໃນ
ເມືອງຫລວງຊູຊາ
2 ຮານານີພີ່ນ້ອງຂອງຂ້າພະເຈົ້າຄົນນຶ່ງມາຈາກຢູດາ ກັບຊາຍບາງຄົນ ຂ້າພະເຈົ້າໄດ້ຖາມເຖິງພວກຢິວທີ່ລອດ
ຕາຍ ຜູ້ຊຶ່ງລອດພົ້ນຈາກການຖືກກວາດໄປເປັນຊະເລີຍ ແລະຖາມເຣື່ອງກ່ຽວກັບເຢຣູຊາເລັມ
3 ເຂົາທັງຫລາຍເວົ້າກັບຂ້າພະເຈົ້າວ່າ, “ຜູ້ທີ່ລອດຊີວິດກັບມາຖິ່ນຖານປະເທດຂອງເຂົາເຈົ້ານັ້ນ ຕົກຢູ່ໃນຄວາມ
ລຳບາກອັນໃຫຍ່ຫລວງ ພວກຕ່າງດ້າວທີ່ຢູ່ໃກ້ກໍດູຖູກຢຽບຫຍາມເຂົາ ພວກເຂົາໄດ້ບອກຂ້າພະເຈົ້າອີກວ່າ ກຳ
ແພງນະຄອນເຢຣູຊາເລັມຍັງຖືກພັງທະລາຍລົງຢູ່ ປະຕູກຳແພງເມືອງກໍຍັງບໍ່ທັນໄດ້ສ້າງຂຶ້ນໃຫມ່ ຕັ້ງແຕ່ມັນ
ໄດ້ຖືກຈູດພຸ້ນ
4 ເມື່ອຂ້າພະເຈົ້າໄດ້ຍິນດັ່ງນັ້ນ ຂ້າພະເຈົ້າກໍນັ່ງຮ້ອງໄຫ້ ຂ້າພະເຈົ້າໄດ້ໄວ້ທຸກ ແລະບໍ່ກິນເຂົ້າເປັນເວລາຫລາຍ
ວັນ ແລະຂ້າພະເຈົ້າໄດ້ອ້ອນວອນພຣະເຈົ້າວ່າ,
5 “ຂ້າແດ່ພຣະຜູ້ເປັນເຈົ້າ ຜູ້ຊົງປະທັບຢູ່ເທິງຟ້າສວັນ ພຣະອົງຊົງຍິ່ງໃຫຍ່ ພວກຂ້ານ້ອຍຢຳເກງພຣະອົງ ພຣະອົງ
ຊົງສັດຊື່ ແລະຍຶດຫມັ້ນໃນຄຳສັນຍາກັບຜູ້ທີ່ຮັກ ແລະຜູ້ປະຕິບັດຕາມຄຳສັ່ງຂອງພຣະອົງ
6 ໂອ ພຣະຜູ້ເປັນເຈົ້າ ໃນເວລາທີ່ຂ້າພຣະອົງອ້ອນວອນທັງວັນແລະຄືນເພື່ອພວກຜູ້ຮັບໃຊ້ຂອງພຣະອົງຄື ໄພ່
ພົນອິສຣາເອນນັ້ນ ຂໍຊົງຫລຽວແລ ແລະສະດັບຮັບຟັງຄຳອ້ອນວອນຂອງຂ້າພຣະອົງດ້ວຍ ຂ້າພະອົງຂໍສາລະ
ພາບວ່າ ພວກຂ້າພຣະອົງຊາວອິສຣາເອນກໍໄດ້ກະທຳບາບຕໍ່ພຣະອົງ ພວກປູ່ຍ່າຕາຍາຍ ແລະຂ້າພຣະອົງກໍ
ໄດ້ກະທຳບາບຕໍ່ສູ້ພຣະອົງເຫມືອນກັນ
7 ພວກຂ້າພຣະອົງໄດ້ປະຕິບັດຢ່າງຊົ່ວຊ້າຕໍ່ພຣະອົງ ພວກຂ້າພຣະອົງບໍ່ໄດ້ປະຕິບັດຕາມທີ່ພຣະອົງຊົງສັ່ງໄວ້
ແລະບໍ່ໄດ້ຍຶດຖືພຣະບັນຍັດທີ່ພຣະອົງຊົງມອບຫມາຍໃຫ້ໂດຍຜ່ານທາງໂມເຊຜູ້ຮັບໃຊ້ຂອງພຣະອົງນັ້ນ
8 ບັດນີ້ ຂໍຊົງລະນຶກເຖິງຄຳທີ່ພຣະອົງຊົງບອກໂມເຊວ່າ, “ຖ້າວ່າ ພວກເຈົ້າໄພ່ພົນອິສຣາເອນບໍ່ມີຄວາມສັດຊື່ຕໍ່
ເຮົາ ເຮົາຈະກະທຳໃຫ້ພວກເຈົ້າແຕກກະຈັດກະຈາຍໄປຖ້າມກາງຊົນຊາດອື່ນ
9 ແຕ່ວ່າ ຖ້າພວກເຈົ້າກັບຄືນມາຫາເຮົາ ແລະປະຕິບັດຕາມສິ່ງທີ່ເຮົາໄດ້ສັ່ງໄວ້ ເຖິງແມ່ນວ່າພວກເຈົ້າແຕກກະ
ຈັດກະຈາຍໄປທົ່ວທຸກມຸມໂລກແລ້ວກໍຕາມ ເຮົາຈະນຳພວກເຈົ້າກັບຄືນມາຍັງບ່ອນທີ່ເຮົາໄດ້ເລືອກໄວ້ ເພື່ອ
ກະທຳໃຫ້ນາມຂອງເຮົາດຳຣົງຢູ່ທີ່ນັ້ນ
10 ເຂົາເຫລົ່ານີ້ເປັນຂ້າໃຊ້ຂອງພຣະອົງ ຊຶ່ງເປັນປະຊາຊົນຂອງພຣະອົງເອງ ພຣະອົງຊົງຊ່ອຍຊີວິດເຂົາດ້ວຍຣິດ
ທານຸພາບອັນຍິ່ງໃຫຍ່ ແລະດ້ວຍກຳລັງຂອງພຣະອົງ

11 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຮັບຟັງຄໍາອ້ອນວອນຂອງຂ້າພຣະອົງ ແລະຄໍາອ້ອນວອນຂອງພວກຂ້າໃຊ້ອື່ນໆທີ່
ຢໍາເກງພຣະອົງ ວັນນີ້ ຂໍພຣະອົງຊົງປະທານຄວາມສໍາເຣັດໃຫ້ແກ່ຂ້າພຣະອົງ ແລະຂໍຊົງບັນດານໃຫ້ເຈົ້າຊີວິດ
ເມດຕາກະຣຸນາຂ້າພຣະອົງເທີນ" ໃນຄາວນັ້ນ ຂ້າພະເຈົ້າເປັນຜູ້ຢາຍເຫລົ້າອະງຸ່ນປະຈໍາໂຕະເຈົ້າຊີວິດ

## 2 ເຂົາສົ່ງເນເຫມີໄປເຢຣູຊາເລັມ

Nehemiah sent to Judah

1 ແລະຢູ່ຕໍ່ມາໃນເດືອນນີສານ (Nisan) ໃນປີທີຊາວແຫ່ງຣັຊການກະສັດອາກຕາເຊີເຊສ ເມື່ອເຈົ້າຊີວິດຊົງສ
ເວີຍພຣະກາຍາຫານ ຂ້າພະເຈົ້າໄດ້ນໍາເຫລົ້າອະງຸ່ນຖວາຍແດ່ພຣະອົງ ແຕ່ກ່ອນພຣະອົງບໍ່ເຄີຍເຫັນຂ້າພະເຈົ້າ
ໂສກເສົ້າເລີຍ
2 ພຣະອົງຊົງຖາມຂ້າພະເຈົ້າວ່າ, "ເປັນຫຍັງເຈົ້າຈຶ່ງໂສກເສົ້າແທ້ ບໍ່ແມ່ນບໍ່ສະບາຍບໍ ເຈົ້າອຸກໃຈຊື່ ໆຕິ"
3 ຂ້າພະເຈົ້າຮູ້ສຶກຢ້ານທີ່ສຸດ ຈຶ່ງທູນຕອບພຣະອົງວ່າ, "ຂໍພຣະອົງຊົງພຣະຈະເຣີນຕລອດໄປ ຈະບໍ່ໃຫ້ຂ້າພຣະ
ອົງໂສກເສົ້າໄດ້ຢ່າງໃດ ໃນເມື່ອເມືອງບ່ອນທີ່ປູ່ຍ່າຕາຍາຍຂອງຂ້າພຣະອົງຖືກຝັງໄວ້ຮ້າງເປົ່າ ແລະປະຕູເມືອງ
ກໍຖືກທໍາລາຍຫມົດ"
4 ເຈົ້າຊີວິດຖາມວ່າ, "ເຈົ້າຕ້ອງການຫຍັງ" ຂ້າພະເຈົ້າໄດ້ອ້ອນວອນຫາພຣະເຈົ້າ ຜູ້ຊົງປະທັບເທິງຟ້າສວັນ
5 ແລ້ວຈຶ່ງທູນຕໍ່ເຈົ້າຊີວິດວ່າ, "ຖ້າວ່າ ພຣະອົງຫາກຊົງພໍພຣະທັຍ ແລະຊົງອະນຸຍາດຕາມຄໍາຮ້ອງຂໍຂອງຂ້າພຣະ
ອົງ ຂໍພຣະອົງຊົງໃຫ້ຂ້າພຣະອົງໄປປະເທດຢູດາ ຄືໄປຍັງເມືອງບ່ອນທີ່ຝັງສົບພວກປູ່ຍ່າຕາຍາຍຂອງຂ້າພຣະ
ອົງ ເພື່ອວ່າຈະສ້າງເມືອງນັ້ນຂຶ້ນໃຫມ່"
6 ເຈົ້າຊີວິດພ້ອມທັງພຣະມະເຫສີທີ່ນັ່ງຄຽງຂ້າງພຣະອົງ ໄດ້ຖາມຂ້າພະເຈົ້າວ່າ, "ຈະໄປດົນປານໃດ ແລະຈະ
ເຫິງນານປານໃດຈຶ່ງຈະກັບມາ" ຂ້າພະເຈົ້າໄດ້ບອກພຣະອົງ ແລະພຣະອົງກໍໄດ້ຕົກລົງຕາມຄໍາຮ້ອງຂໍ
7 ແລ້ວຂ້າພະເຈົ້າກໍໄດ້ຮ້ອງຂໍໃຫ້ເຈົ້າຊີວິດຊົງໂຜດກະຣຸນາຂຽນພຣະຣາຊສານເຖິງພວກຜູ້ປົກຄອງທາງແຂວງເອີ
ຟຣາດທິດຕາເວັນຕົກ ເພື່ອແນະນໍາໃຫ້ພວກທ່ານອະນຸຍາດໃຫ້ຂ້າພະເຈົ້າເດີນທາງໄປເຖິງເມືອງຢູດາ
8 ຂ້າພະເຈົ້າໄດ້ຮ້ອງຂໍໃຫ້ພຣະອົງຂຽນພຣະຣາຊສານເຖິງ ອາຊັບ ຜູ້ຮັກສາປ່າໄມ້ຂອງພຣະຣາຊາ ເພື່ອບອກໃຫ້
ເຂົາຈັດສິ່ງໄມ້ສໍາລັບສ້າງປະຕູປ້ອມຍາມຂອງພຣະວິຫານ ສໍາລັບສ້າງກໍາແພງເມືອງ ແລະເຮືອນຢູ່ຂອງຂ້າພະ
ເຈົ້າ ເຈົ້າຊີວິດກໍຕົກລົງຕອບສນອງທຸກສິ່ງຕາມຄໍາຮ້ອງຂໍ ເພາະວ່າພຣະຜູ້ເປັນເຈົ້າຊົງຢູ່ກັບຂ້າພະເຈົ້າ
9 ເຈົ້າຊີວິດໄດ້ສັ່ງນາຍທະຫານບາງຄົນ ແລະຫມວດທະຫານມ້າໄປກັບຂ້າພະເຈົ້າ ແລ້ວຂ້າພະເຈົ້າກໍໄດ້ເດີນ
ທາງໄປສູ່ເອີ  ຟຣາດທາງທິດຕາເວັນຕົກ ເມື່ອໄປເຖິງຂ້າພະເຈົ້າກໍມອບພຣະຣາຊສານນັ້ນໃຫ້ພວກຜູ້ປົກຄອງ
ເມືອງ
10 ແຕ່ເມື່ອຊານບັນລັດ ຊາວໂຮໂຣນ ແລະໂຕບີຢາ ຊາວອັມໂມນຂ້າຣາຊການຊາບຂ່າວນີ້ ເປັນເຣື່ອງທີ່ບໍ່ພໍໃຈ
ເຂົາຢ່າງຍິ່ງ ທີ່ມີຄົນມາເຮັດວຽກເພື່ອຫາຄວາມສຸກໃຫ້ແກ່ຊາວອິສຣາເອນ

**ເນເຫມີຊັກຊວນປະຊາຊົນໃຫ້ສ້າງກໍາແພງຂຶ້ນໃຫມ່**

Nehemiah's Inspection of the walls

11 ຂ້າພະເຈົ້າຈຶ່ງໄດ້ມາຍັງເຢຣູຊາເລັມ ແລະພັກຢູ່ທີ່ນັ້ນສາມວັນ
12 ແລ້ວຂ້າພະເຈົ້າລຸກຂຶ້ນໃນກາງຄືນ ຄືຂ້າພະເຈົ້າກັບບາງຄົນທີ່ຢູ່ກັບຂ້າພະເຈົ້າ ຂ້າພະເຈົ້າບໍ່ໄດ້ບອກໃຫ້ໃຜຮູ້
ເຖິງເຣື່ອງທີ່  ພຣະເຈົ້າຊົງດົນໃຈຂ້າພະເຈົ້າໃຫ້ທໍາເພື່ອນະຄອນເຢຣູຊາເລັມ ຂ້າພະເຈົ້າບໍ່ມີສັດກັບຂ້າພະເຈົ້າ
ນອກຈາກສັດທີ່ຂ້າພະເຈົ້າຂີ່ຢູ່
13 ໃນກາງຄືນຂ້າພະເຈົ້າອອກໄປທາງປະຕູເບື້ອງຮ່ອມພູ ແລະຜ່ານບໍ່ນັ້ງກອນ ຈົນໄປຮອດປະຕູບ່ອນຖິ້ມຂີ້ເຫຍື່ອ
ເພື່ອລຽບເບິ່ງກໍາແພງເມືອງທີ່ເພພັງ ແລະປະຕູເມືອງທີ່ຖືກທໍາລາຍ

14 ແລ້ວຂ້າພະເຈົ້າກໍຍ່າງຕໍ່ໄປທາງປະຕູບໍ່ນໍ້າ ແລະທາງສະນໍ້າພຣະຣາຊວັງ ທາງເສັ້ນນີ້ບໍ່ມີບ່ອນໃຫ້ລໍຂອງຂ້າພະເຈົ້າຜ່ານໄປໄດ້

15 ດັ່ງນັ້ນ ຂ້າພະເຈົ້າຈຶ່ງຂຶ້ນໄປທາງຮ່ອມພູເພື່ອກວດເບິ່ງກຳແພງເມືອງ ຂ້າພະເຈົ້າໄດ້ກັບຄືນມາທາງເກົ່າ ແລະກັບຄືນເມືອເມືອງໂດຍຜ່ານທາງປະຕູເບື້ອງຮ່ອມພູ

16 ພວກບັນດາຂ້າຣາຊການບໍ່ຮູ້ເລີຍວ່າ ຂ້າພະເຈົ້າໄດ້ໄປບ່ອນໃດ ແລະໄດ້ເຮັດຫຍັງແດ່ ນອກຈາກນີ້ ຂ້າພະເຈົ້າບໍ່ໄດ້ບອກຫຍັງຫມົດແກ່ພວກຢູດາ ບັນດາປະໂຣຫິດ ພວກຜູ້ນຳ ພວກບັນດາຂ້າຣາຊການ ແລະພວກອື່ນໆທີ່ຈະປະກອບສ່ວນເຂົ້າໃນວຽກການນີ້

Decision to Restore the Walls

17 ແຕ່ດຽວນີ້ ຂ້າພະເຈົ້າໄດ້ເວົ້າກັບພວກເຂົາວ່າ, “ພວກທ່ານເຫັນບໍວ່າ ຄວາມວຸ້ນວາຍໃຈທີ່ພວກເຮົາມີຫລວງຫລາຍສໍ່າໃດ ຍ້ອນວ່ານະຄອນເຢຣູຊາເລັມຖືກຮ້າງເປົ່າ ແລະປະຕູເມືອງຖືກທຳລາຍ ດັ່ງນັ້ນ ຂໍໃຫ້ພວກເຮົາພ້ອມພາກັນສ້າງກຳແພງເມືອງຂຶ້ນໃຫມ່ ເພື່ອພວກເຮົາຈະບໍ່ອັບອາຍຂາຍຫນ້າ”

18 ແລ້ວຂ້າພະເຈົ້າໄດ້ບອກພວກເຂົາວ່າ ພຣະເຈົ້າໄດ້ຊົງຊ່ອຍເຫລືອ ແລະສະຖິດຢູ່ກັບຂ້າພະເຈົ້າຢ່າງໃດ ຕລອດເຖິງສິ່ງທີ່ເຈົ້າຊີວິດໄດ້ບອກກັບຂ້າພະເຈົ້າອີກດ້ວຍ ພວກເຂົາເວົ້າຂຶ້ນວ່າ, “ຂໍໃຫ້ພວກເຮົາເລີ້ມລົງມືສ້າງເທີນ” ແລ້ວພວກເຂົາກໍຕຽມພ້ອມລົງມືທຳງານ

19 ແຕ່ວ່າ ເມື່ອຊານບານລັດ ຊາວໂຮໂຣນ ແລະໂຕບີຢາ ຂ້າຣາຊການ ຊາວອັມໂມນ ເກເຊມຊາວອາຣັບ (ຊາວອາຣາເບັຽ) ໄດ້ຮູ້ຂ່າວ ພວກເຂົາກໍພາກັນຫົວຂວັນດູຖູກພວກຂ້າພະເຈົ້າ ພວກເຂົາເວົ້າວ່າ, “ພວກເຈົ້າຄິດຢ່າງໃດຈຶ່ງເຮັດຢ່າງນີ້ ພວກເຈົ້າຈະກະບົດເຈົ້າຊີວິດຫລື

20 ແລ້ວຂ້າພະເຈົ້າຈຶ່ງຕອບວ່າ, “ພຣະເຈົ້າຜູ້ຊົງປະທັບຢູ່ເທິງຟ້າສວັນ ຈະຊົງປະທານຄວາມສຳເຣັດໃຫ້ແກ່ພວກເຮົາ ພວກຂ້າພະເຈົ້າກຳລັງເລີ້ມລົງມືສ້າງຂຶ້ນ ເພາະວ່າພວກຂ້າພະເຈົ້າເປັນຜູ້ຮັບໃຊ້ຂອງພຣະອົງ ແຕ່ພວກທ່ານບໍ່ມີສ່ວນໃດໃນນະຄອນເຢຣູຊາເລັມ ພວກທ່ານບໍ່ມີສິດໃດໆໃນບ່ອນນີ້”

## 3 ສ່ວນທີ່ກຳນົດໃຫ້ຊ່ອມ

Organization of the Work

1 ແລ້ວປະໂຣຫິດໃຫຍ່ເອລີອາຊິບໄດ້ລຸກຂຶ້ນພ້ອມກັບພີ່ນ້ອງຂອງທ່ານ ບັນດາປະໂຣຫິດທັງຫລາຍໄດ້ສ້າງປະຕູແກະ ເຂົາໄດ້ທຳພິທີຊຳຣະໃຫ້ບໍຣິສຸດແລະໄດ້ຕັ້ງບານປະຕູ ເຂົາທັງຫລາຍໄດ້ທຳພິທີຊຳຣະໃຫ້ບໍຣິສຸດຈົນເຖິງຫໍຄອຍນຶ່ງຮ້ອຍໄກໄປຈົນເຖິງຫໍຄອຍຮານານເອນ

2 ແລະຖັດຕໍ່ໄປ ຄົນຊາວເຢຣີໂກກໍໄດ້ສ້າງ ແລະຖັດຕໍ່ເຂົາໄປ ຊັກເກີບຸດອິມຣີກໍໄດ້ສ້າງ

3 ແລະລູກຫລານຂອງຮັສເຊນາຢາໄດ້ສ້າງປະຕູປາ ເຂົາໄດ້ວາງວົງກົບ ແລະໄດ້ຕັ້ງບານປະຕູ ຕິດລູກສລັກແລະດານປະຕູ

4 ຖັດຕໍ່ເຂົາໄປເມເຣໂມດ ບຸດອູຣີຢາ ຜູ້ເປັນບຸດຂອງຮັກໂກດໄດ້ສ້ອມແຊມ ແລະຖັດຕໍ່ເຂົາໄປຊາໂດກ ບຸດບາອານາໄດ້ສ້ອມແຊມ

5 ແລະຖັດຕໍ່ໄປຊາວເຕໂກໄດ້ສ້ອມແຊມ ແຕ່ພວກຂຸນນາງຂອງເຂົາບໍ່ຍ່ອມເອົາບ່າມາຮັບງານຂອງພຣະຜູ້ເປັນເຈົ້າຂອງເຂົາທັງຫລາຍ

6 ແລະຢົວອາດາບຸດຂອງປາເຊຢາ ແລະເມຊູນລາມບຸດຂອງເບໂຊດັຍຢາໄດ້ສ້ອມແຊມປະຕູເກົ່າ ເຂົາວາງວົງກົບແລະຕັ້ງບານປະຕູ ຕິດລູກສລັກແລະດານປະຕູ

7 ແລະຖັດຕໍ່ເຂົາໄປ ຄືເມລາຕີຢາ ຊາວກີເບໂອນ ແລະຢາໂດນ ຊາວເມໂຣໂນທ ຄົນເມືອງກີເບໂອນແລະເມືອງມີສປາໄດ້ສ້ອມແຊມ ຊຶ່ງຢູ່ໃຕ້ການປົກຄອງຂອງເຈົ້າເມືອງຟາກຕາເວັນຕົກຂອງແມ່ນໍ້າເອີຟຣາດ

8 ຖັດຕໍ່ເຂົາໄປ ຄືອຸສຊີເອນບຸດຮາຣ໌ຮັຍຢາຊ່າງທອງໄດ້ສ້ອມແຊມ ຖັດຕໍ່ເຂົາໄປຄືຮານານີຢາຊ່າງນ້ຳຫອມຄົນນຶ່ງໄດ້ສ້ອມແຊມ ເຂົາບູຣະນະເຢຣູຊາເລັມໄກໄປຈົນເຖິງຕອນກຳແພງກວ້າງ

9 ຖັດຕໍ່ເຂົາໄປ ຄືເຣຟັຍຢາບຸດຮູຣ໌ ຜູ້ປົກຄອງແຂວງເຄິ່ງນຶ່ງຂອງເຢຣູຊາເລັມໄດ້ສ້ອມແຊມ

10 ຖັດຕໍ່ເຂົາໄປຄື ເຢດັຍຢາບຸດຮາຣູມັບ ໄດ້ສ້ອມແຊມກົງຂ້າມກັບບ້ານຂອງເຂົາ ແລະຖັດຕໍ່ເຂົາໄປຄື ຮັດຕຸສບຸດຮາຊັບນັຍຢາໄດ້ສ້ອມແຊມ

11 ມັນຄີຢາບຸດຮາລີມ ແລະຮັສຊູບບຸດປາຮັດໂມອາບໄດ້ສ້ອມແຊມ ອີກສ່ວນນຶ່ງ ແລະຫໍຄອຍເຕົາອົບ

12 ຖັດຕໍ່ເຂົາໄປຄື ຊັນລູມບຸດຮັນໂລເຮສ ຜູ້ປົກຄອງແຂວງເຄິ່ງນຶ່ງຂອງເຢຣູຊາເລັມໄດ້ສ້ອມແຊມ ທັງຕົວເຂົາແລະບຸດຍິງຂອງເຂົາ

13 ຮານູນ ແລະຊາວເມືອງຊາໂນອາໄດ້ສ້ອມແຊມປະຕູຫຸບເຂົາ ເຂົາສ້າງປະຕູຂຶ້ນໃຫມ່ແລະຕັ້ງບານປະຕູ ຕິດລູກສລັກແລະການປະຕູ ແລະສ້ອມແຊມກຳແພງລະຍະພັນສອກ ໄກໄປຈົນເຖິງປະຕູກອງຂີ້ເຫຍື່ອ

14 ມັນຄີຢາບຸດເຣຄັບ ຜູ້ປົກຄອງແຂວງເບັດຮັກເຄເຣມໄດ້ສ້ອມປະຕູກອງຂີ້ເຫຍື່ອ ເຂົາສ້າງແລະຕັ້ງບານປະຕູຕິດລູກສລັກແລະດານປະຕູ

15 ຊັນລູມບຸດໂກນໂຮເຊ ຜູ້ປົກຄອງແຂວງມີສປາ ໄດ້ສ້ອມແຊມປະຕູນ້ຳພຸ ໄດ້ສ້າງມຸງແລະຕັ້ງບານປະຕູຕິດລູກສລັກແລະດານປະຕູ ທ່ານໄດ້ສ້າງກຳແພງສະເຊຣາຕົງໄປທາງອຸທຍານໄກໄປຈົນເຖິງຂັ້ນໄດຊຶ່ງລົງໄປຈາກນະຄອນດາວິດ

16 ຖັດຕໍ່ເຂົາໄປເນເຫມີບຸດອັສບຸກ ຜູ້ປົກຄອງແຂວງເບັດຊູຣ໌ເຄິ່ງນຶ່ງໄດ້ສ້ອມແຊມ ໄປຈົນເຖິງທີ່ກົງກັນຂ້າມກັບອຸບໂມງຝັງສົບຂອງດາວິດ ເຖິງສະຊຸດແລະເຖິງທີ່ພັກຂອງທະຫານທີ່ເກັ່ງກ້າ

17 ຖັດຕໍ່ເຂົາໄປຄົນເລວີໄດ້ສ້ອມແຊມ ຄື ເຣຮູມບຸດຂອງບານີ ຖັດຕໍ່ເຂົາໄປຮາຊາບີຢາ ຜູ້ປົກຄອງແຂວງເກອີລາເຄິ່ງນຶ່ງໄດ້ສ້ອມແຊມສ່ວນຂອງເຂົາ

18 ຖັດຕໍ່ເຂົາໄປພີ່ນ້ອງຂອງເຂົາໄດ້ສ້ອມແຊມຄື ບາວວັຍບຸດເຮນາດາດ ຜູ້ປົກຄອງແຂວງເກອີລາເຄິ່ງນຶ່ງ

19 ຖັດຕໍ່ເຂົາໄປຄື ເອເຊີບຸດເຢຊູອາ ຜູ້ປົກຄອງເມືອງມີສປາໄດ້ສ້ອມແຊມອີກ ສ່ວນນຶ່ງກົງຂ້າມກັບທາງຂຶ້ນໄປຍັງຄັງອາວຸດຕົງທີ່ແຈມຸມຫັກຂອງກຳແພງ

20 ຖັດຕໍ່ເຂົາໄປຄື ບາບາຣູກບຸດຊັບບັຍ ໄດ້ສ້ອມແຊມຢ່າງຮ້ອນໃຈອີກສ່ວນນຶ່ງ ຕັ້ງແຕ່ແຈມຸມຫັກຂອງກຳແພງຈົນເຖິງປະຕູເຮືອນຂອງປະໂຣຫິດເອລີຢາຊີບ

21 ຖັດຕໍ່ເຂົາໄປຄື ເມເຣໂມທບຸດອູຣີຢາ ຜູ້ເປັນບຸດຮັກໂກສ ໄດ້ສ້ອມແຊມອີກສ່ວນນຶ່ງ ຕັ້ງແຕ່ປະຕູເຮືອນຂອງເອລີຢາຊີບເຖິງປາຍເຮືອນຂອງເອລີຢາຊີບ

22 ຖັດຕໍ່ເຂົາໄປຄືບັນດາປະໂຣຫິດຊາວທີ່ຮາບພຽງໄດ້ສ້ອມແຊມ

23 ຖັດຕໍ່ເຂົາໄປຄື ເບັນຢາມິນ ແລະຮັສຊູບໄດ້ສ້ອມແຊມກົງກັນຂ້າມກັບບ້ານຂອງເຂົາທັງຫລາຍ ຖັດຕໍ່ເຂົາໄປອາຊາຣີຢາບຸດມາອາຊັຍຢາ ຜູ້ເປັນບຸດອານານີຢາ ໄດ້ສ້ອມແຊມຂ້າງເຮືອນຂອງເຂົາເອງ

24 ຖັດຕໍ່ເຂົາໄປຄື ບິນນູອີບຸດເຮນາດາດ ໄດ້ສ້ອມແຊມອີກສ່ວນນຶ່ງ ຕັ້ງແຕ່ບ້ານຂອງອາຊາຣີຢາ ເຖິງແຈມຸມຫັກຂອງກຳແພງ

25 ປາລານບຸດອູຊັຍ ໄດ້ສ້ອມແຊມທີ່ກົງກັນຂ້າມກັບແຈມຸມຫັກ ແລະຫໍຄອຍທີ່ຍື່ນຈາກພຣະຣາຊວັງຫລັງເທິງທີ່ເດີ່ນ ທະຫານຮັກສາພຣະອົງ ຖັດຕໍ່ເຂົາໄປຄື ເປດັຍຢາບຸດຂອງປາໂຣສ

26 ແລະຄົນໃຊ້ປະຈຳພຣະວິຫານຢູ່ທີ່ໂອເຟນ ໄດ້ສ້ອມແຊມໄປຈົນເຖິງທີ່ກົງກັນຂ້າມກັບປະຕູນ້ຳທາງດ້ານຕາເວັນອອກ ແລະທີ່ຫໍຄອຍຍື່ນອອກໄປ

27 ຖັດຕໍ່ເຂົາໄປຊາວເຕໂກໄດ້ສ້ອມແຊມອີກສ່ວນນຶ່ງກົງກັນຂ້າມກັບຫໍຄອຍໃຫຍ່ທີ່ຍື່ນອອກໄປໄກໄປຈົນເຖິງປະຕູເມືອງເອເຟນ

28 ບັນດາປະໂຣຫິດໄດ້ສ້ອມແຊມເໜືອປະຕູມ້າຂຶ້ນໄປ ຕ່າງກໍສ້ອມທີ່ກົງກັນຂ້າມກັບເຮືອນຂອງຕົນ

29 ຖັດຕໍ່ເຂົາໄປຊາໂດກບຸດອິມເມີ ໄດ້ສ້ອມແຊມທີ່ກົງກັນຂ້າມກັບເຮືອນຂອງເຂົາ ຖັດຕໍ່ເຂົາໄປເຊມັຍຢາບຸດເຊການີຢາ ຄົນເຝົ້າປະຕູຕາເວັນອອກໄດ້ສ້ອມແຊມ

30 ຖັດຕໍ່ເຂົາໄປຮານານີຢາບຸດເຊເລມີຢາ ແລະຮານູນບຸດຄົນທີ່ຫົກຂອງຊາລາບ ໄດ້ສ້ອມແຊມອີກສ່ວນນຶ່ງ ຖັດຕໍ່ເຂົາໄປຄື ເມຊູນລາມບຸດເບເຣຄີຢາ ໄດ້ສ້ອມແຊມກົງກັນຂ້າມກັບຫ້ອງຂອງເຂົາ

31 ຖັດຕໍ່ເຂົາໄປ ມັນຄີຢາຊ່າງທອງຄຳຄົນນຶ່ງໄດ້ສ້ອມແຊມໄກໄປຈົນເຖິງເຮືອນຂອງຄົນໃຊ້ປະຈຳພຣະວິຫານ ແລະຂອງພໍ່ຄ້າ ກົງກັນຂ້າມກັບປະຕູກວດພົນ ຈົນເຖິງຫ້ອງຊັ້ນເທິງທີ່ແຈມຸມ

32 ແລະລະຫວ່າງຫ້ອງຊັ້ນເທິງທີ່ແຈມຸມ ກັບປະຕູແກະນັ້ນ ບັນດາຊ່າງທອງແລະພໍ່ຄ້າໄດ້ສ້ອມແຊມ

## 4 ພວກສັດຕຣູຂັດຂວາງວຽກງານຂອງເນເຫມີ

Hostile Plots Thwarted

1 ເມື່ອຊານບັນລັດໄດ້ຍິນວ່າ ພວກຂ້າພະເຈົ້າທີ່ເປັນຊາວຢູດາກຳລັງສ້າງກຳແພງເມືອງ ທ່ານກໍໂມໂຫຂຶ້ນ ແລະເວົ້າເຍາະເຍີ້ຍພວກຢິວ

2 ເຂົາເວົ້າຕໍ່ໜ້າພີ່ນ້ອງຂອງເຂົາ ແລະຕໍ່ໜ້າກອງທະຫານຊາມາເຣັຽວ່າ, “ຊາວຢູດາທີ່ໜ້າສົມເພດເວດທະນາພວກນີ້ ຄິດຢ່າງໃດຈຶ່ງເຮັດຢ່າງນີ້ ພວກເຂົາຄາດໝາຍວ່າຈະສ້າງເມືອງຂຶ້ນໃຫມ່ຊັ້ນບໍ ພວກເຂົາຄິດວ່າຈະສາມາດເຮັດໃຫ້ແລ້ວໃນວັນດຽວໂດຍການເຜົາເຄື່ອງຖວາຍບູຊາຊັ້ນບໍ ພວກເຂົາຈະເອົາເສດກຳແພງທີ່ຖືກທຳລາຍແລ້ວນັ້ນມາກໍ່ສ້າງອີກໄດ້ຊັ້ນບໍ”

3 ໂຕບີຢາ ຊາວອຳໂມນທີ່ຢືນຢູ່ຂ້າງທ່ານໄດ້ເວົ້າຕື່ມຂຶ້ນວ່າ, “ພວກເຂົາກໍ່ສ້າງກຳແພງແບບໃດກັນ ແມ່ນແຕ່ໝາແລ່ນຕຳກໍຍັງຊຸລົ້ມ”

4 ຂ້າພະເຈົ້າເນເຫມີ ຈຶ່ງອ້ອນວອນພຣະຜູ້ເປັນເຈົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຟັງຄຳທີ່ພວກເຂົາດູຖູກຢຽບຫຍາມພວກຂ້າພຣະອົງແດ່ທ້ອນ ຂໍໃຫ້ຄຳເຍາະເຍີ້ຍນັ້ນຕົກຖືກຕົວເຂົາເອງ ແລະຂໍໃຫ້ເຂົາໄປເປັນຄົນຂີ້ຄຸກຢູ່ຕ່າງປະເທດເທີນ

5 ຂໍພຣະອົງຢ່າໃຫ້ອະພັຍໂທດໃນຄວາມຊົ່ວຊ້າຂອງເຂົາ ແລະຂໍຢ່າໄດ້ລືມຄວາມບາບຂອງພວກເຂົາ ເພາະວ່າພວກເຂົາໝິ່ນປະມາດພວກຂ້າພຣະອົງຜູ້ກຳລັງສ້າງເມືອງນີ້”

6 ດັ່ງນັ້ນ ພວກຂ້າພະເຈົ້າຈຶ່ງພາກັນສ້າງກຳແພງເມືອງຕໍ່ໄປ ບໍ່ພໍເທົ່າໃດກຳແພງເມືອງກໍສູງຂຶ້ນໄດ້ເຄິ່ງນຶ່ງແລ້ວ ຍ້ອນວ່າປະຊາຊົນພາກັນຮ້ອນຮົນຕໍ່ວຽກງານ

7 ເມື່ອຊານບັນລັດ ແລະໂຕບີຢາ ຊາວອາຣາເບັຽ (Arabs) ຊາວອຳໂມນ ແລະຊາວອັສໂດດໄດ້ຍິນຂ່າວວ່າ ພວກຂ້າພະເຈົ້າສ້າງກຳແພງນະຄອນເຢຣູຊາເລັມຄືບໜ້າຕໍ່ໄປ ແລະທັງຮູ້ວ່າປ່ອງທີ່ແຕກກໍໄດ້ອັດໝົດແລ້ວ ພວກເຂົາຈຶ່ງຄຽດແຄ້ນຫລາຍ

8 ດັ່ງນັ້ນ ພວກເຂົາຈຶ່ງພາກັນວາງແຜນຕໍ່ສູ້ນະຄອນເຢຣູຊາເລັມ ແລະໄດ້ສ້າງຄວາມປັ່ນປ່ວນຂຶ້ນ

9 ແຕ່ພວກຂ້າພະເຈົ້າໄດ້ອ້ອນວອນພຣະເຈົ້າຂອງພວກຂ້າພະເຈົ້າ ແລະຈັດທະຫານເຝົ້າຍາມຕໍ່ຕ້ານພວກເຂົາຕລອດວັນ ຕລອດຄືນ

10 ຊາວຢູດາພາກັນຮ້ອງເພງວ່າ “ພວກເຮົາອ່ອນແຮງໃນການຂົນຂອງ ຫີນແຕກໝຸ່ນທີ່ຈະຕ້ອງເອົາໄປຖິ້ມນັ້ນຫລາຍໂພດ ວັນນີ້ພວກເຮົາຈະສ້າງກຳແພງເມືອງໄດ້ຢ່າງໃດ”

11 ພວກສັດຕຣູຄິດວ່າ ພວກຂ້າພະເຈົ້າບໍ່ເຫັນເຂົາ ແລະເວົ້າວ່າ “ພວກເຂົາບໍ່ຮູ້ຈັກເຫດການທີ່ເກີດຂຶ້ນ ຈົນວ່າເຂົາໄດ້ມາຢູ່ໃນເມືອງນີ້ແລ້ວ ເພື່ອປະຫານຊີວິດ ແລະຂັດຂວາງວຽກງານຂອງພວກຂ້າພະເຈົ້າ

12 ພວກຢູດາທີ່ຢູ່ນຳພວກສັດຕຣູກໍມາເຕືອນພວກເຮົາທຸກລະຍະເຖິງແຜນການທີ່ສັດຕຣູວາງແຜນຕໍ່ສູ້

13 ດັ່ງນັ້ນ ຂ້າພະເຈົ້າຈຶ່ງເອົາຫອກ ດາບ ແລະຫນ້າທະນູໃຫ້ປະຊາຊົນ ໂດຍຈັດໃຫ້ເຂົາຢູ່ເປັນກຸ່ມທາງເບື້ອງຫລັງ
ຂອງກຳແພງຕາມບ່ອນທີ່ຍັງບໍ່ທັນແລ້ວ
14 ຂ້າພະເຈົ້າເຫັນວ່າປະຊາຊົນມີຄວາມກັງວົນໃຈ ຂ້າພະເຈົ້າຈຶ່ງເວົ້າກັບເຂົາ ແລະພວກຜູ້ນຳພ້ອມທັງພວກຂ້າ
ຣາຊການວ່າ, “ບໍ່ຕ້ອງຢ້ານພວກສັດຕຣູດອກ ຈົ່ງຈື່ວ່າພຣະຜູ້ເປັນເຈົ້າຊົງຍິ່ງໃຫຍ່ ແລະເປັນທີ່ເກັງກົວຫລາຍ ພ
ຣະອົງຊົງຕໍ່ສູ້ເພື່ອເພື່ອນຮ່ວມຊາດ ເພື່ອລູກເມັຽ ແລະປະເທດຊາດຂອງທ່ານ”
15 ເມື່ອພວກສັດຕຣູໄດ້ຮູ້ຂ່າວວ່າ ພວກຂ້າພະເຈົ້າຮູ້ຈັກແຜນການຂອງເຂົາ ພວກເຂົາຈຶ່ງຮູ້ວ່າພຣະເຈົ້າຊົງທຳໃຫ້
ແຜນການຂອງເຂົາຜ່າຍແພ້ໄປ ສ່ວນພວກຂ້າພະເຈົ້າທຸກຄົນກໍກັບຄືນເມືອເຮັດວຽກຕາມກຳແພງເມືອງ
16 ຈາກນັ້ນ ປະຊາຊົນຂອງຂ້າພະເຈົ້າເຄິ່ງນຶ່ງກໍພາກັນເຮັດວຽກ ແຕ່ສ່ວນເຄິ່ງນຶ່ງອີກໄດ້ເປັນທະຫານຍາມ ພວກ
ເຂົາຖືດາບ ທະນູ ແຜ່ນເຫລັກຕ້ານທານ ແລະນຸ່ງເຄື່ອງຫຸ້ມເກາະ ແລະພວກຜູ້ນຳກໍສນັບສນູນຊາວຢູດາຍ່າງ
ເຕັມທີ່ ຄືພວກທີ່ສ້ອມແຊມເມືອງນັ້
17 ສ່ວນພວກລຳລຽງເຄື່ອງກໍ່ສ້າງແຕ່ລະຄົນມືນຶ່ງຖືເຄື່ອງ ແລະມືນຶ່ງອີກຖືອາວຸດ
18 ພວກທີ່ກໍ່ສ້າງໃນເວລາເຮັດວຽກກໍມີດາບເຫນັບແອວໄວ້ທຸກຄົນ ສ່ວນຜູ້ທີ່ເປົ່າແກສັນຍານບອກເຫດການ
ນັ້ນໄດ້ຢູ່ກັບຂ້າພະເຈົ້າ
19 ຂ້າພະເຈົ້າບອກກັບປະຊາຊົນ ພວກຂ້າຣາຊການ ແລະພວກຜູ້ນຳໃຫ້ເຂົ້າໃຈວ່າ “ວຽກງານຂອງພວກເຮົາໄດ້
ຂຍາຍອອກໄປເປັນລະຍະໄກ ແລະພວກເຮົາໄດ້ຢາຍກັນຢູ່ຫ່າງໆເທິງກຳແພງ
20 ຖ້າພວກທ່ານໄດ້ຍິນສຽງສັນຍານບອກເຫດຈົ່ງພາກັນຮີບມາທ້ອນໂຮມຢູ່ອ້ອມຮອບຂ້າພະເຈົ້າ ພຣະເຈົ້າຂອງ
ພວກເຮົາຈະສູ້ຮົບໃຫ້ພວກເຮົາເອງ”
21 ດັ່ງນັ້ນ ທຸກໆວັນຕັ້ງແຕ່ເຊົ້າມືດຈົນເຖິງດາວອອກໃນເວລາກາງຄືນ ຄົນເຄິ່ງນຶ່ງໃນພວກຂ້າພະເຈົ້າກໍເຮັດວຽກຢູ່
ຕາມກຳແພງ ແລະພວກເຄິ່ງນຶ່ງອີກກໍຖືຫອກຢືນຍາມ
22 ໃນເວລານັ້ນ ຂ້າພະເຈົ້າໄດ້ບອກໃຫ້ຜູ້ມີພາຣະເຮັດວຽກທຸກຄົນພ້ອມທັງຜູ້ຊ່ອຍຂອງພວກເຂົາຄ້າງຄືນທີ່ນະ
ຄອນເຢຣູຊາເລັມ ເພື່ອໃຫ້ເຂົາຍາມເມືອງໃນເວລາກາງຄືນ ແລະເຮັດວຽກໃນເວລາກາງເວັນ
23 ຂ້າພະເຈົ້າພ້ອມຫມູ່ເພື່ອນ ຍາດພີ່ນ້ອງ ຄົນໃຊ້ ແລະຄົນເຝົ້າຍາມປະຈຳຕົວຂອງຂ້າພະເຈົ້າບໍ່ໄດ້ຖອດເຄື່ອງ
ນຸ່ງໃນຕອນ ກາງຄືນ ພວກຂ້າພະເຈົ້າທຸກຄົນກໍບໍ່ໄດ້ປະອາວຸດຈັກເທື່ອ

## 5 ລົ້ມເລີກການເກັບດອກເບັ້ຽເງິນຢືມ

Nehemiah Deals with Oppression

1 ມີສຽງຮ້ອງຈົ່ມຂອງປະຊາຊົນ ແລະຂອງພັຣຍາຂອງເຂົາກ່າວໂທດພີ່ນ້ອງພວກຢິວ
2 ເພາະມີຄົນທີ່ກ່າວວ່າ “ເຮົາຫລາຍຄົນດ້ວຍກັນ ທັງບຸດຊາຍແລະບຸດຍິງຂອງເຮົາ ຂໍໃຫ້ເຮົາໄດ້ເຂົ້າ ເພື່ອເຮົາຈະ
ໄດ້ຮັບປະທານແລະມີຊີວິດຢູ່ໄດ້”
3 ແລະມີຄົນກ່າວວ່າ, “ເຮົາຕ້ອງຈຳນຳໄຮ່ນາຂອງເຮົາ ເພື່ອຈະໄດ້ເຂົ້າ ເພາະເຫດການອຶດຢາກອາຫານ”
4 ແລະຄົນອື່ນໆກ່າວວ່າ, “ເຮົາໄດ້ຂໍຢືມເງິນມາເປັນຄ່າພາສີຖວາຍກະສັດ ໂດຍຈຳນຳນາແລະສວນອະງຸ່ນຂອງ
ເຮົາ
5 ເນື້ອກາຍຂອງເຮົາເປັນເຫມືອນເນື້ອກາຍພີ່ນ້ອງຂອງເຮົາ ລູກຂອງເຮົາກໍເຫມືອນລູກຂອງເຂົາ ແຕ່ເຮົາກໍຍັງໃຫ້
ບຸດຊາຍແລະບຸດຍິງຂອງເຮົາເປັນທາດ ບຸດຍິງຂອງເຮົາບາງຄົນເປັນທາດແລ້ວ ແລະເຮົາຊ່ອຍເຂົາບໍ່ໄດ້ ເພາະ
ຄົນອື່ນຍຶດນາ ແລະສວນອະງຸ່ນຂອງເຮົາ”
6 ເມື່ອຂ້າພະເຈົ້າໄດ້ຍິນສຽງຮ້ອງຈົ່ມຂອງເຂົາ ແລະຖ້ອຍຄຳຂອງເຂົາ ຂ້າພະເຈົ້າກໍຄຽດແຄ້ນ

7 ຂ້າພະເຈົ້າຄິດຕຶກຕອງແລ້ວກໍນຳຄວາມນີ້ໄປກ່າວຫາພວກຂຸນນາງແລະເຈົ້າຫນ້າທີ່ຂ້າພະເຈົ້າເວົ້າກັບເຂົາວ່າ,
"ທ່ານທັງຫລາຍຕ່າງຄົນຕ່າງໄດ້ໃຫ້ຢືມເງິນໂດຍຮຽກຂອງປະກັນຈາກພີ່ນ້ອງຂອງຕົນ" ແລະຂ້າພະເຈົ້າກໍເອີ້ນ
ຊຸມນຸມໃຫຍ່ມາສູ້ກັບເຂົາ
8 ຂ້າພະເຈົ້າກ່າວແກ່ເຂົາວ່າ, "ເຮົາໄດ້ໄຖ່ພວກຢິວພີ່ນ້ອງຂອງເຮົາຜູ້ຖືກຂາຍໄປຕ່າງປະເທດຄືນມາ ຕາມແຕ່
ເຮົາຈະສາມາດເຮັດໄດ້ ແຕ່ທ່ານກັບຂາຍພີ່ນ້ອງຂອງທ່ານ ເພື່ອເຂົາຈະໄດ້ຖືກຂາຍໃຫ້ແກ່ພວກເຮົາ" ຄົນທັງ
ຫລາຍກໍງຽບຢູ່ ເວົ້າບໍ່ອອກ
9 ຂ້າພະເຈົ້າຈຶ່ງກ່າວວ່າ, "ສິ່ງທີ່ທ່ານທັງຫລາຍເຮັດຢູ່ນັ້ນບໍ່ດີ ບໍ່ຄວນທີ່ທ່ານຈະດຳເນີນໃນຄວາມຢຳເກງພຣະ
ເຈົ້າຂອງເຮົາທັງຫລາຍ ເພື່ອປ້ອງກັນການເຍາະເຍີ້ຍຂອງປະຊາຊາດເຫລົ່ານັ້ນ ຊຶ່ງເປັນສັດຕຣູຂອງເຮົາດອກ
ຫລື
10 ນອກຈາກນີ້ ຂ້າພະເຈົ້າກັບພີ່ນ້ອງຂອງຂ້າພະເຈົ້າ ແລະຄົນໃຊ້ຂອງຂ້າພະເຈົ້າໃຫ້ເຂົາຢືມເງິນແລະຢືມເຂົ້າ
ໃຫ້ເຮົາເລີກ ການໃຫ້ຢືມໂດຍເອົາຂອງປະກັນນັ້ນເສັຽເຖີດ
11 ໃນວັນນີ້ ຂໍຈົ່ງຄືນມາ ສວນອະງຸ່ນ ສວນຫມາກກອກ ແລະເຮືອນຂອງເຂົາ ແລະສ່ວນຮ້ອຍຂອງເງິນ ເຂົ້າ
ເຫລົ້າອະງຸ່ນ ແລະນ້ຳມັນ ຊຶ່ງທ່ານໄດ້ຍຶດເອົາຈາກເຂົານັ້ນເສັຽ"
12 ແລ້ວເຂົາທັງຫລາຍເວົ້າວ່າ, "ເຮົາຈະຄືນສິ່ງເຫລົ່ານີ້ແລະຈະບໍ່ຮຽກຮ້ອງສິ່ງໃດໆຈາກເຂົາທັງຫລາຍ ເຮົາຈະກະ
ທຳຕາມທີ່ທ່ານເວົ້າ" ແລະຂ້າພະເຈົ້າກໍເອີ້ນບັນດາປະໂຣຫິດມາ ແລະໃຫ້ປະໂຣຫິດເອົາຄຳສາບານຈາກເຂົາ
ທັງຫລາຍວ່າເຂົາຈະກະທຳຕາມທີ່ເຂົາສັນຍາແລ້ວນັ້ນ
13 ຂ້າພະເຈົ້າກໍແກ້ຜ້າຄຽນແອວອອກສັ່ນໄປມາ ຂ້າພະເຈົ້າໄດ້ເວົ້າວ່າ, "ດັ່ງນັ້ນແຫລະ ຖ້າຄົນໃດບໍ່ໄດ້ກະທຳ
ຕາມສັນຍານີ້ ຂໍພຣະເຈົ້າຊົງສັ່ນເຂົາເສັຽຈາກເຮືອນຂອງເຂົາ ແລະຈາກການງານຂອງເຂົາໃຫ້ເຂົາຖືກສັ່ນອອກ
ແລ້ວໄປຕົວເປົ່າ" ແລະຊຸມນຸມທັງປວງກ່າວວ່າ, "ອາແມນ" ແລະໄດ້ສັຣເສີນພຣະເຈົ້າ ແລ້ວປະຊາຊົນກໍໄດ້ກະ
ທຳຕາມທີ່ເຂົາໄດ້ສັນຍາໄວ້

### The Generosity of Nehemiah

14 ນອກຈາກນີ້ ຕັ້ງແຕ່ເວລາທີ່ຂ້າພະເຈົ້າໄດ້ຮັບແຕ່ງຕັ້ງໃຫ້ເປັນຜູ້ວ່າຣາຊການໃນແຜ່ນດິນຢູດາ ຕັ້ງແຕ່ປີທີຊາວ
ຈົນປີທີສາມສິບສອງແຫ່ງຣັຊການອາກຕາເຊີເຊສພຣະຣາຊາ ສິບສອງປີດ້ວຍກັນ ຂ້າພະເຈົ້າຫລືພີ່ນ້ອງຂອງຂ
້າພະເຈົ້າບໍ່ໄດ້ຮັບປະທານອາຫານຂອງຕຳແຫນ່ງຜູ້ວ່າຣາຊການ
15 ຜູ້ວ່າຣາຊການຄົນທີ່ຢູ່ກ່ອນຂ້າພະເຈົ້າໄດ້ບຽດບຽນປະຊາຊົນ ໄດ້ເອົາເງິນເປັນຄ່າອາຫານແລະເຫລົ້າອະງຸ່ນ
ໄປຈາກເຂົາວັນລະສີ່ສິບເຊເກລ ແມ່ນແຕ່ຂ້າຣາຊການຂອງທ່ານກໍໄດ້ໃຊ້ອຳນາດເຫນືອປະຊາຊົນ ແຕ່ຂ້າພະ
ເຈົ້າບໍ່ໄດ້ກະທຳເຊັ່ນນັ້ນ ເພາະຄວາມຢຳເກງພຣະເຈົ້າ
16 ຂ້າພະເຈົ້າຍັງຍຶດງານສ້າງກຳແພງເມືອງນີ້ຢູ່ ແລະບໍ່ໄດ້ຫາທີ່ດິນເລີຍ ແລະຄົນໃຊ້ຂອງຂ້າພະເຈົ້າທັງສິ້ນກໍໄດ້
ຊຸມນຸມກັນທຳງານກັນທີ່ນັ້ນ
17 ນອກຈາກນີ້ ຂ້າພະເຈົ້າມີນຶ່ງຮ້ອຍຫ້າສິບຄົນທີ່ກິນລ້ຽງຮ່ວມໂຕະກັບຂ້າພະເຈົ້າ ຄືພວກຢິວແລະເຈົ້າຫນ້າທີ່
ນອກເຫນືອຈາກບັນດາຜູ້ທີ່ມາຢູ່ກັບເຮົາທັງຫລາຍຈາກປະຊາຊາດຜູ້ຊຶ່ງຢູ່ຮອບເຮົາ
18 ສິ່ງທີ່ຕຽມໄວ້ໃນວັນນຶ່ງໆມີງົວໂຕນຶ່ງ ແລະແກະທີ່ຄັດເລືອກແລ້ວຫົກໂຕ ເປັດໄກ່ເຂົາກໍຈັດໄວ້ໃຫ້ຂ້າພະເຈົ້າ
ດ້ວຍໃນທຸກໆສິບວັນ ເຫລົ້າອະງຸ່ນມາກມາຍຫລາຍຖົງ ຂ້າພະເຈົ້າບໍ່ໄດ້ຮຽກຮ້ອງເອົາສ່ວນອາຫານຂອງຕຳ
ແຫນ່ງຜູ້ວ່າຣາຊການເພາະວ່າການບົວລະບັດນັ້ນຫນັກຫນ່ວງຫລາຍເທິງຊົນຊາດນີ້ຢູ່ແລ້ວ
19 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຊົງລະນຶກເຖິງສິ່ງທີ່ຂ້າພຣະອົງໄດ້ກະທຳເພື່ອຊົນຊາດນີ້ ໃຫ້ເກີດຜົນດີເຖີດ

## 6 ການປອງຮ້າຍຂອງສັດຕຣູ

Intrigues of Enemies Foiled

1 ຢູ່ມາເມື່ອມີຣາຍງານໃຫ້ຊານບັນລັດ ໂຕບີອາ ແລະເກເຊມ ຊາວອາຣັບກັບສັດຕຣູອື່ນຂອງເຮົາທັງຫລາຍຊາບວ່າຂ້າພະເຈົ້າໄດ້ກໍ່ກຳແພງ ແລະບໍ່ມີປ່ອງເຫລືອຢູ່ (ແມ່ນວ່າໃນຄາວນັ້ນຂ້າພະເຈົ້າຍັງບໍ່ໄດ້ຕັ້ງບານປະຕູທີ່ປະຕູເມືອງ)

2 ຊານບັນລັດ ກັບເກເຊມໃຊ້ໃຫ້ມາຫາຂ້າພະເຈົ້າວ່າ, “ຂໍເຊີນມາພົບກັນໃນຊົນນະບົດແຫ່ງນຶ່ງທີ່ທົ່ງພຽງໂອໂນ” ແຕ່ເຂົາທັງຫລາຍເຈຕນາຈະທຳອັນຕະຣາຍແກ່ຂ້າພະເຈົ້າ

3 ຂ້າພະເຈົ້າກໍໃຊ້ຜູ້ສົ່ງຂ່າວໄປຫາເຂົາວ່າ, “ຂ້າພະເຈົ້າກຳລັງທຳງານໃຫຍ່ ລົງມາບໍ່ໄດ້ ເປັນຫຍັງຈະໃຫ້ງານຢຸດເສັຽໃນ ຂນະທີ່ຂ້າພະເຈົ້າປະງານລົງມາຫາທ່ານ”

4 ແລ້ວເຂົາໃຊ້ໃຫ້ຄົນມາຫາຂ້າພະເຈົ້າຢ່າງນີ້ສີ່ຄັ້ງ ຂ້າພະເຈົ້າກໍຕອບເຂົາໄປທຳນອງດຽວກັນ

5 ຊານບັນລັດໄດ້ສົ່ງຄົນຂອງທ່ານມາຫາຂ້າພະເຈົ້າໃນທຳນອງດຽວກັນເປັນຄັ້ງທີຫ້າ ຄືຈົດຫມາຍເປີດຊອງ

6 ໃນນັ້ນມີຂຽນໄວ້ວ່າ, “ເຂົາກ່າວການໃນຖ້າມກາງປະຊາຊາດທັງຫລາຍແລະເກເຊມກໍກ່າວດ້ວຍວ່າ ທ່ານແລະພວກຢິວມີ ເຈຕນາຈະກະບົດ ເຫດນັ້ນແຫລະທ່ານຈຶ່ງສ້າງກຳແພງ ແລະທ່ານປາຖນາຈະເປັນພຣະຣາຊາຕາມຖ້ອຍຄຳນີ້

7 ແລະທ່ານໄດ້ແຕ່ງຕັ້ງຜູ້ປະກາດພຣະທັມໄວ້ໃຫ້ປ່າວຮ້ອງກ່ຽວກັບຕົວທ່ານໃນເຢຣູຊາເລັມວ່າ, “ມີພຣະຣາຊາໃນຢູດາ” ບັດນີ້ຈະໄດ້ຣາຍງານໃຫ້ພຣະຣາຊາຊົງຊາບຕາມຖ້ອຍຄຳເຫລົ່ານີ້ ເຫດສັນນັ້ນຂໍເຊີນທ່ານມາຫາລືດ້ວຍກັນ”

8 ແລ້ວຂ້າພະເຈົ້າກໍໃຊ້ຄົນໃຫ້ໄປຫາເຂົາກ່າວວ່າ, “ສິ່ງທີ່ທ່ານກ່າວມານັ້ນເຮົາບໍ່ໄດ້ກະທຳເຊັ່ນນັ້ນເລີຍ ທ່ານປັ້ນແຕ່ງເຣື່ອງຂຶ້ນຕາມໃຈຂອງທ່ານເອງ”

9 ເພາະເຂົາທັງຫລາຍຕ້ອງການທີ່ຈະໃຫ້ເຮົາຕົກໃຈຄິດວ່າ, “ມືຂອງເຂົາຈະປະອອກຈາກງານໄປເສັຽ ແລະງານຈະໄດ້ບໍ່ສຳເຣັດ” ແຕ່ຂ້າແດ່ພຣະເຈົ້າ ບັດນີ້ຂໍພຣະອົງຊົງເສີມກຳລັງມືຂອງຂ້າພຣະອົງ

10 ແລະຂ້າພະເຈົ້າເຂົ້າໄປໃນເຮືອນຂອງເຊມັຍຢາ ບຸດເດລັຍຢາ ຜູ້ເປັນບຸດເມເຮດອາເບນ ຜູ້ທີ່ເກັບຕົວຢູ່ ເຂົາເວົ້າວ່າ, “ໃຫ້ເຮົາໄປພົບກັນໃນພຣະວິຫານຂອງພຣະເຈົ້າ ໃຫ້ເຮົາປິດປະຕູພຣະວິຫານເສັຽ ເພາະເຂົາທັງຫລາຍຈະມາຂ້າທ່ານເວລາກາງຄືນເຂົາຈະມາຂ້າທ່ານເສັຽ”

11 ແຕ່ຂ້າພະເຈົ້າວ່າ, “ຄົນຢ່າງຂ້າພະເຈົ້າຈະຫນີຫລື ແລະຄົນຢ່າງຂ້າພະເຈົ້າຈະເຂົ້າໄປຢູ່ໃນພຣະວິຫານ ແລະມີຊີວິດຢູ່ໄດ້ຫລື ຂ້າພະເຈົ້າບໍ່ໄປ”

12 ຂ້າພະເຈົ້າເຂົ້າໃຈແລະເຫັນວ່າ ພຣະເຈົ້າບໍ່ໄດ້ຊົງໃຊ້ເຂົາ ແຕ່ເຂົາໄດ້ປະກາດພຣະທັມໃສ່ຮ້າຍຂ້າພະເຈົ້າເພາະໂຕບີອາ ແລະຊານບັນລັດໄດ້ຈ້າງເຂົາ

13 ເຂົາທັງສອງໄດ້ຈ້າງເຂົາມາດ້ວຍຫວັງຈະໃຫ້ຂ້າພະເຈົ້າຢ້ານແລ້ວກະທຳເຊັ່ນນັ້ນ ຈະໄດ້ບາບ ແລະເຂົາຈະມີເຣື່ອງໃສ່ຮ້າຍຂ້າພະເຈົ້າ ເພື່ອຈະເຍາະເຍີ້ຍຂ້າພະເຈົ້າ

14 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍພຣະອົງຊົງລະນຶກເຖິງໂຕບີອາ ແລະຊານບັນລັດ ຕາມສິ່ງເຫລົ່ານີ້ທີ່ເຂົາໄດ້ກະທຳ ທັງໂນອາດີຢາຍິງຜູ້ປະກາດພຣະທັມ ແລະຜູ້ປະກາດພຣະທັມອື່ນໆຊຶ່ງຕ້ອງການໃຫ້ຂ້າພຣະອົງຢ້ານ

The Wall Completed

15 ກຳແພງຈຶ່ງສຳເຣັດໃນວັນທີຊາວຫ້າເດືອນເອລູນ ໃນຫ້າສິບສອງວັນ

16 ແລະຢູ່ມາເມື່ອສັດຕຣູທັງສິ້ນຂອງເຮົາທັງຫລາຍໄດ້ຍິນປະຊາຊາດທັງປວງຮອບເຮົາກໍຢ້ານແລະເຂົາກໍນ້ອຍເນື້ອຕ່ຳໃຈ ເພາະເຂົາທັງຫລາຍຢັ່ງຮູ້ວ່າງານນີ້ທີ່ໄດ້ສຳເຣັດໄປກໍດ້ວຍພຣະເຈົ້າຂອງເຮົາຊົງຊ່ອຍເຫລືອ

17 ນອກຈາກນີ້ ໃນຄັ້ງນັ້ນຊຸນນາງທັງຫລາຍຂອງຢູດາກໍໄດ້ສົ່ງຈົດໝາຍໄປເຖິງໂຕບີອາ ແລະຈົດໝາຍຂອງໂຕ
ບີອາກໍມາເຖິງເຂົາ
18 ເພາະມີຫລາຍຄົນໃນຢູດາໄດ້ຜູກພັນກັບເຂົາໄວ້ດ້ວຍຄຳສາບານ ເພາະເຂົາເປັນບຸດເຂີຍຂອງເຊການີຢາ ຜູ້
ເປັນບຸດອາຣາ ແລະໂຢໂຮຮານານບຸດຂອງເຂົາໄດ້ແຕ່ງງານກັບບຸດຍິງຂອງເມຊູນລາມ ຜູ້ເປັນບຸດເບເຣຄີຢາ
19 ເຂົາທັງຫລາຍເວົ້າເຖິງຄວາມດີຂອງໂຕບີອາຕໍ່ໜ້າຂ້າພະເຈົ້າດ້ວຍ ແລະຣາຍງານຄຳຂອງຂ້າພະເຈົ້າໄປໃຫ້
ເຂົາ ແລະໂຕບີອາກໍໄດ້ສົ່ງຈົດໝາຍມາໃຫ້ຂ້າພະເຈົ້າ ເພື່ອໃຫ້ຢ້ານ

## 7 ເນເຫມີເລືອກຕັ້ງຜູ້ຄອບຄອງເຢຣູຊາເລັມ

The Conclusion of the Work

1 ເມື່ອສ້າງກຳແພງເສັດແລ້ວ ຂ້າພະເຈົ້າກໍຕັ້ງບານປະຕູ ແລະຜູ້ເຝົ້າປະຕູ ນັກຮ້ອງເພງ ແລະແຕ່ງຕັ້ງຄົນເລວີໄວ້
2 ຂ້າພະເຈົ້າມອບໃຫ້ຮານານີພີ່ນ້ອງຂອງຂ້າພະເຈົ້າ ແລະຮານານີຢາຜູ້ວ່າການປ້ອມເປັນຜູ້ດູແລເຢຣູຊາເລັມ
ເພາະເຂົາສັດຊື່ແລະເປັນຄົນຢຳເກງພຣະເຈົ້າຫລາຍກວ່າຄົນອື່ນໆຢູ່
3 ຂ້າພະເຈົ້າເວົ້າກັບເຂົາວ່າ, "ຢ່າໃຫ້ປະຕູເມືອງເຢຣູຊາເລັມເປີດຈົນກວ່າແດດຈະຮ້ອນ ແລະເມື່ອເຂົາຍືນເຝົ້າ
ຍາມຢູ່ ກໍໃຫ້ປິດແລະເອົາດານກັ້ນໄວ້ ຈົ່ງແຕ່ງຕັ້ງຍາມຈາກຊາວເຢຣູຊາເລັມ ຕ່າງກໍປະຈະທີ່ຂອງເຂົາ ແລະ
ຕ່າງກໍຢູ່ຍາມກົງກັນຂ້າມເຮືອນຂອງເຂົາ"
4 ເມືອງນັ້ນກວ້າງແລະໃຫຍ່ ແຕ່ຄົນພາຍໃນນ້ອຍແລະບ້ານຊ່ອງກໍຍັງບໍ່ໄດ້ສ້າງ

**ຣາຍຊື່ຊະເລີຍທີ່ກັບຄືນ**

Lists of the Returned Exiles

(ອຊຣ 2:1-70)

5 ແລ້ວພຣະເຈົ້າຊົງດົນໃຈຂ້າພະເຈົ້າໃຫ້ເອີ້ນຊຸມນຸມພວກຊຸນນາງແລະເຈົ້າໜ້າທີ່ແລະປະຊາຊົນເພື່ອຈະຂຶ້ນ
ທະບຽນສຳມະໂນຄົວເຊື້ອສາຍ ຂ້າພະເຈົ້າພົບໜັງສືສຳມະໂນຄົວເຊື້ອສາຍຂອງຄົນທີ່ຂຶ້ນມາຄັ້ງກ່ອນ ຂ້າພະ
ເຈົ້າໄດ້ເຫັນຊຶ່ງຂຽນໄວ້ວ່າ
6 ຕໍ່ໄປນີ້ ເປັນປະຊາຊົນແຫ່ງມົນທົນທີ່ຂຶ້ນມາຈາກການເປັນຊະເລີຍໃນພວກທີ່ຖືກກວາດໄປ ຊຶ່ງເນບູກາດເນສ
ຊາພຣະຣາຊາແຫ່ງບາບີໂລນໄດ້ກວາດໄປ ເຂົາທັງຫລາຍກັບຄືນມາຍັງເຢຣູຊາເລັມແລະຢູດາຕ່າງກັບຄືນຍັງ
ຫົວເມືອງຂອງຕົນ
7 ເຂົາທັງຫລາຍທີ່ກັບມາກັບເຊຣູບບາເບນ ເຢຊູອາ ເນເຫມີ ອາຊາຣີຢາ ຣາອາມີຢາ ນາຮາມານີ ໂມຣ໌ເດກັຍ
ບິນຊານ ມີສເປເຣທ ບິກວັຍ ເນຮູມ ບາອານາ ຈ□ານວນປະຊາກອນອິສຣາເອນ ຄື
8 ເຊື້ອສາຍປາໂຣສ ສອງພັນນຶ່ງຮ້ອຍເຈັດສິບສອງຄົນ
9 ເຊື້ອສາຍເຊຟາຕີຢາ ສາມຮ້ອຍເຈັດສິບສອງຄົນ
10 ເຊື້ອສາຍອາຣາ ຫົກຮ້ອຍຫ້າສິບສອງຄົນ
11 ເຊື້ອສາຍປາຮັດໂມອາບ ຄືເຊື້ອສາຍຂອງເຢຊູອາ ແລະໂຢອາບ ສອງພັນແປດຮ້ອຍສິບແປດຄົນ
12 ເຊື້ອສາຍເອລາມ ນຶ່ງພັນສອງຮ້ອຍຫ້າສິບສີ່ຄົນ
13 ເຊື້ອສາຍຊັດຕູ ແປດຮ້ອຍສີ່ສິບຫ້າຄົນ
14 ເຊື້ອສາຍຊັກກັຍ ເຈັດຮ້ອຍຫົກສິບຄົນ
15 ເຊື້ອສາຍບິນນູຍ ຫົກຮ້ອຍສີ່ສິບແປດຄົນ
16 ເຊື້ອສາຍເບບັຍ ຫົກຮ້ອຍຊາວແປດຄົນ
17 ເຊື້ອສາຍອັສກາດ ສອງພັນສາມຮ້ອຍຊາວສອງຄົນ

18 ເຊື້ອສາຍອາໂດນີການ ຫົກຮ້ອຍຫົກສິບເຈັດຄົນ
19 ເຊື້ອສາຍບີກວັຍ ສອງພັນຫົກສິບເຈັດຄົນ
20 ເຊື້ອສາຍອາດີນ ຫົກຮ້ອຍຫ້າສິບຫ້າຄົນ
21 ເຊື້ອສາຍອາເຕີ ຄືເຮເຊກີຢາ ເກົ້າສິບແປດຄົນ
22 ເຊື້ອສາຍຮາຊູມ ສາມຮ້ອຍຊາວແປດຄົນ
23 ເຊື້ອສາຍເບຊັຍ ສາມຮ້ອຍຊາວສີ່ຄົນ
24 ເຊື້ອສາຍຮາຣີຟ ນຶ່ງຮ້ອຍສິບສອງຄົນ
25 ເຊື້ອສາຍກີເບໂອນ ເກົ້າສິບຫ້າຄົນ
26 ຄົນຊາວເບັດເລເຮັມແລະເນໂຕຟາ ນຶ່ງຮ້ອຍແປດສິບແປດຄົນ
27 ເຊື້ອສາຍອານາໂທດ ນຶ່ງຮ້ອຍຊາວແປດຄົນ
28 ເຊື້ອສາຍເບັດອັສມາເວທ ສີ່ສິບສອງຄົນ
29 ຄົນຊາວກີຣິອາດເຢອາຣີມ ເຄຟີຣາ ແລະເບເອີໂອທ ເຈັດຮ້ອຍສີ່ສິບສາມຄົນ
30 ຄົນຊາວຣາມາ ແລະເກລາ ຫົກຮ້ອຍຊາວເອັດຄົນ
31 ຄົນຊາວມີກມັສ ນຶ່ງຮ້ອຍຊາວສອງຄົນ
32 ຄົນຊາວເບັດເອນ ແລະອາອີ ນຶ່ງຮ້ອຍຊາວສາມຄົນ
33 ຄົນຊາວເນໂບອີກແຫ່ງນຶ່ງ ຫ້າສິບສອງຄົນ
34 ເຊື້ອສາຍເອລາມອີກຄົນນຶ່ງ ນຶ່ງພັນສອງຮ້ອຍຫ້າສິບສີ່ຄົນ
35 ເຊື້ອສາຍຮາຣີມ ສາມຮ້ອຍຊາວຄົນ
36 ເຊື້ອສາຍຊາວເຢຣີໂກ ສາມຮ້ອຍສີ່ສິບຫ້າຄົນ
37 ເຊື້ອສາຍຊາວໂລດ ຊາວຮາດີດ ແລະຊາວໂອໂນ ເຈັດຮ້ອຍຊາວເອັດຄົນ
38 ເຊື້ອສາຍຊາວເຊນາອາ ສາມພັນເກົ້າຮ້ອຍສາມສິບຄົນ
39 ບັນດາປະໂຣຫິດ ເຊື້ອສາຍເຢດັຍຢາ ເກົ້າຮ້ອຍເຈັດສິບສາມຄົນ
40 ເຊື້ອສາຍອິມເມີ ນຶ່ງພັນຫ້າສິບສອງຄົນ
41 ເຊື້ອສາຍປັສຮູຣ໌ ນຶ່ງພັນສອງຮ້ອຍສີ່ສິບເຈັດຄົນ
42 ເຊື້ອສາຍຮາຣີມ ນຶ່ງພັນສິບເຈັດຄົນ
43 ຄົນເລວີ ຄື ເຊື້ອສາຍເຢຊູອາ ຄືຂອງກາດມີເອນແຫ່ງເຊື້ອສາຍໂຮເດວາ ເຈັດສິບສີ່ຄົນ
44 ບັນດານັກຮ້ອງຄື ເຊື້ອສາຍອາສາບ ນຶ່ງຮ້ອຍສີ່ສິບແປດຄົນ
45 ຄົນເຝົ້າປະຕູ ຄື ເຊື້ອສາຍຊັນລູມ ເຊື້ອສາຍອາເຕີ ເຊື້ອສາຍຕັນໂມນ ເຊື້ອສາຍອັກກູບ ເຊື້ອສາຍຮາຕີຕາ ເຊື້ອສາຍໂຊບັຍ ນຶ່ງຮ້ອຍສາມສິບແປດຄົນ
46 ຄົນໃຊ້ປະຈຳພຣະວິຫານ ຄືເຊື້ອສາຍຊີຮາ ເຊື້ອສາຍຮາຊູຟາ ເຊື້ອສາຍຕັບບາໂອດ
47 ເຊື້ອສາຍເກໂຣສ ເຊື້ອສາຍຊີອາ ເຊື້ອສາຍປາໂດນ
48 ເຊື້ອສາຍເລບານາ ເຊື້ອສາຍຮາກາບາ ເຊື້ອສາຍຊັນມັຍ
49 ເຊື້ອສາຍຮານານ ເຊື້ອສາຍກິດເດນ ເຊື້ອສາຍກາຮາຣ໌
50 ເຊື້ອສາຍເຣອັຍຢາ ເຊື້ອສາຍເຣຊີນ ເຊື້ອສາຍເນໂກດາ
51 ເຊື້ອສາຍກັສຊາມ ເຊື້ອສາຍອູສຊາ ເຊື້ອສາຍປາເຊອາ
52 ເຊື້ອສາຍເບຊັຍ ເຊື້ອສາຍເມອູນີມ ເຊື້ອສາຍເນຟູເຊຊີມ
53 ເຊື້ອສາຍບາກບູກ ເຊື້ອສາຍຮາກູຟາ ເຊື້ອສາຍຮາຣ໌ຮູ

54 ເຊື້ອສາຍບັສລີດ ເຊື້ອສາຍເມຮີດາ ເຊື້ອສາຍຮາຣ໌ຊາ
55 ເຊື້ອສາຍບາຣ໌ໂກສ ເຊື້ອສາຍຊີເສຣາ ເຊື້ອສາຍເຕມາ
56 ເຊື້ອສາຍເນຊີຢາ ເຊື້ອສາຍ ຮາຕີຟາ
57 ເຊື້ອສາຍຂອງຜູ້ຮັບໃຊ້ຂອງໂຊໂລໂມນ ເຊື້ອສາຍໂຊຕັຍ ເຊື້ອສາຍໂຊເຟເຣທ ເຊື້ອສາຍເປຣີດາ
58 ເຊື້ອສາຍຢາອາລາ ເຊື້ອສາຍດາຣ໌ໂກນ ເຊື້ອສາຍກິດເດນ
59 ເຊື້ອສາຍເຊຟາຕີຢາ ເຊື້ອສາຍຮັດຕີນ ເຊື້ອສາຍໂປເຄເຣດຮັສເຊບາອີມ ເຊື້ອສາຍອາໂມນ
60 ຄົນໃຊ້ປະຈຳພຣະວິຫານທັງສິ້ນ ແລະເຊື້ອສາຍແຫ່ງຂ້າຣາຊການຂອງໂຊໂລໂມນ ມີສາມຮ້ອຍເກົ້າສິບສອງ
ຄົນ
61 ຕໍ່ໄປນີ້ແມ່ນບັນດາຄົນທີ່ຂຶ້ນມາຈາກເຕນເມລາ ເຕນຮາຣ໌ຊາ ເຄຣຸບ ອັດໂດນ ແລະອິມເມີ ແຕ່ເຂົາພິສູດຕະ
ກູນຂອງເຂົາຫລືເຊື້ອວົງຂອງເຂົາບໍ່ໄດ້ ວ່າເຂົາເປັນຄົນອິສຣາເອນຫລືບໍ
62 ຄືເຊື້ອສາຍເດລັຍຢາ ເຊື້ອສາຍໂຕບີອາ ເຊື້ອສາຍເນໂກດາ ຫົກຮ້ອຍສີ່ສິບສອງຄົນ
63 ຈາກບັນດາປະໂຣຫິດຄື ເຊື້ອສາຍໂຮບັຍຢາ ເຊື້ອສາຍຮັກໂກສ ເຊື້ອສາຍບາກຊີນລັຍ (ຜູ້ມີພັຣຍາຄົນນຶ່ງເປັນ
ບຸດຍິງຂອງບາກຊີນລັຍຄົນກີເລອາດ ຈຶ່ງໄດ້ຊື່ຕາມນັ້ນ)
64 ຄົນເຫລົ່ານີ້ຫາການລົງທະບຽນຂອງເຂົາໃນທະບຽນສຳມະໂນຄົວເຊື້ອສາຍ ແຕ່ຫາບໍ່ພົບ ຈຶ່ງຖືວ່າເປັນຄົນທຳ
ມະດາ ແລະຖືກຕັດອອກຈາກພວກປະໂຣຫິດ
65 ຜູ້ວ່າຣາຊການເມືອງສັ່ງເຂົາບໍ່ໃຫ້ຮັບປະທານອາຫານບໍຣິສຸດທີ່ສຸດຈົນກວ່າຈະມີປະໂຣຫິດທີ່ຈະປຶກສາກັບອູ
ຣີມ ແລະທູມມີມເສັຽກ່ອນ
66 ຊຸມນຸມຊົນທັງຫມົດດ້ວຍກັນມີສີ່ຫມື່ນສອງພັນສາມຮ້ອຍຫົກສິບຄົນ
67 ນອກເຫນືອຈາກຄົນໃຊ້ຊາຍຍິງຂອງເຂົາ ຊຶ່ງມີຢູ່ເຈັດພັນສາມຮ້ອຍສາມສິບເຈັດຄົນ ແລະເຂົາມີນັກຮ້ອງສອງ
ຮ້ອຍສີ່ສິບຫ້າຄົນທັງຊາຍແລະຍິງ
68 ມ້າຂອງເຂົາມີເຈັດຮ້ອຍສາມສິບຫົກໂຕ ລໍສອງຮ້ອຍສີ່ສິບຫ້າໂຕ
69 ອູດສີ່ຮ້ອຍສາມສິບຫ້າໂຕ ແລະລໍຫົກພັນເຈັດຮ້ອຍຊາວໂຕ
70 ຫົວຫນ້າຕະກູນບາງຄົນໄດ້ຖວາຍໃຫ້ແກ່ງານ ຜູ້ວ່າຣາຊການຖວາຍເຂົ້າພຣະຄັງເປັນທອງຄຳນຶ່ງພັນດາຣິກ
ຊາມຫ້າສິບຫນ່ວຍ ເສື້ອປະໂຣຫິດຫ້າຮ້ອຍສາມສິບໂຕ
71 ແລະຫົວຫນ້າຕະກູນບາງຄົນຖວາຍໃຫ້ແກ່ພຣະຄັງຂອງງານເປັນທອງຄຳສອງຫມື່ນດາຣິກ ເງິນສອງພັນສອງ
ຮ້ອຍມີນັສ (Minas)
72 ແລະສິ່ງທີ່ປະຊາຊົນສ່ວນທີ່ເຫລືອຖວາຍນັ້ນ ມີທອງຄຳສອງຫມື່ນດາຣິກ ເງິນສອງພັນມີນັສ ແລະເສື້ອປະໂຣ
ຫິດຫົກສິບເຈັດໂຕ
73 ດັ່ງນັ້ນບັນດາປະໂຣຫິດ ຄົນເລວີ ຄົນເຝົ້າປະຕູ ນັກຮ້ອງ ປະຊາຊົນບາງຄົນ ຄົນໃຊ້ປະຈຳພຣະວິຫານ ແລະຄົນ
ອິສຣາເອນທັງປວງອາສັຍຢູ່ໃນຫົວເມືອງຂອງຕົນ

## 8 ເອັຊຣາອ່ານພຣະທັມໃຫ້ປະຊາຊົນຟັງ

Ezra Summons the People to Obey the Law

1 ໃນເດືອນທີ່ເຈັດ ຊາວອິສຣາເອນໄດ້ຢາຍກັນຢູ່ຕາມບ້ານເມືອງຂອງພວກເຂົາ ໃນວັນທີນຶ່ງຂອງເດືອນນັ້ນ
ພວກເຂົາທັງຫມົດໄດ້ໂຮມກັນຢູ່ເດີ່ນຕໍ່ຫນ້າປະຕູນ້ຳທີ່ນະຄອນເຢຣູຊາເລັມ ພວກເຂົາໄດ້ຮ້ອງຂໍປະໂຣຫິດເອັຊ
ຣາ ຜູ້ຮອບຮູ້ໃນດ້ານພຣະທັມທີ່ພຣະຜູ້ເປັນເຈົ້າຊົງມອບໃຫ້ພວກອິສຣາເອນຜ່ານທາງໂມເຊ

2 ໃຫ້ທ່ານນຳເອົາປຶ້ມພຣະທັມອອກມາ ເອັຊຣາກໍເອົາປຶ້ມອອກມາ ແລະນຳໄປຍັງບ່ອນທີ່ປະຊາຊົນເຕົ້າໂຮມກັນ
ຢູ່ ມີທັງຜູ້ຊາຍຜູ້ຍິງແລະເດັກນ້ອຍທີ່ເຂົ້າໃຈໄດ້
3 ໃນເດີ່ນຕິດກັບປະຕູນ້ຳນັ້ນ ເອັຊຣາໄດ້ອ່ານພຣະທັມແຕ່ເຊົ້າມືດຈົນເຖິງທ່ຽງ ພວກເຂົາທຸກຄົນຟັງຢ່າງຕັ້ງອົກ
ຕັ້ງໃຈ
4 ເອັຊຣາອ່ານຢູ່ເທິງເວທີທີ່ທຳດ້ວຍໄມ້ ທີ່ເຂົາເຈົ້າສ້າງຂຶ້ນສຳລັບໂອກາດຢ່າງນີ້ ພວກເຂົາຢືນຢູ່ຂ້າງຂວາຂອງ
ທ່ານຄື ມັດຕີທີຢາ ເຊມາ ອານັຍຢາ ອູຣີຢາ ຮິນກີຢາ ແລະມາອາເຊຢາ ສ່ວນພວກທີ່ຢືນຢູ່ຂ້າງຊ້າຍຂອງທ່ານ
ຄືເປດັຍຢາ ມີຊາເອນ ມັນຄີຢາ ຮັສຊູມ ຮັສບັດດານາ ເຊຄາຣີຢາ ແລະເມຊູນລາມ
5 ໃນຂນະ ເອັຊຣາຢືນຢູ່ເທິງເວທີ ແລະເປີດປຶ້ມນັ້ນອອກມາອ່ານຕໍ່ໜ້າປະຊາຊົນ ທຸກຄົນໄດ້ລຸກຢືນຂຶ້ນ
6 ເອັຊຣາຈຶ່ງເວົ້າວ່າ, “ໃຫ້ພວກເຮົາ ສັຣເສີນພຣະຜູ້ເປັນເຈົ້າ ຜູ້ຊົງເປັນພຣະເຈົ້າອົງຍິ່ງໃຫຍ່” ປະຊາຊົນທຸກຄົນກໍ
ພາກັນຍົກມືຂຶ້ນ ແລະຕອບວ່າ, “ອາແມນ ອາແມນ” ແລ້ວເຂົາກໍຄຸເຂົ່າລົງ ແລະກົ້ມຂາບນະມັສການ
7 ຕໍ່ມາ ທຸກຄົນໄດ້ລຸກຢືນຂຶ້ນຢູ່ບ່ອນເກົ່າ ແລ້ວຊາວເລວີບາງຄົນກໍໄດ້ອະທິບາຍພຣະທັມສູ່ເຂົາຟັງ ຊາວເລວີນີ້ຄື
ເຢຊູອາ ບານີ ເຊເຣບີຢາ ຢາມີນ ອັກກູບ ຊັບເບທັຍ ໂຮດີຢາ ມາອາເຊຢາ ເກລີຕາ ອາຊາຣີຢາ ໂຢຊາບາດ ຮາ
ນານ ເປລັຍຢາ
8 ແລະເຂົາທັງຫລາຍອ່ານຈາກໜັງສື ຈາກທັມບັນຍັດຂອງພຣະເຈົ້າເປັນຂໍ້ໆ ແລະເຂົາກໍແປຄວາມໝາຍເພື່ອ
ໃຫ້ປະຊາຊົນເຂົ້າໃຈຂໍ້ຄວາມທີ່ອ່ານນັ້ນ
9 ເມື່ອເຂົາໄດ້ຍິນຂໍ້ພຣະທັມນັ້ນ ພວກເຂົາຮູ້ສຶກຕື້ນຕັນໃຈ ແລະຮ້ອງໄຫ້ຂຶ້ນ ແລ້ວເນເຫມີ ເອັຊຣາ ແລະຊາວເລ
ວີຜູ້ອະທິບາຍພຣະທັມຂອງພຣະເຈົ້າໄດ້ບອກປະຊາຊົນວ່າ, “ວັນນີ້ ເປັນວັນບໍຣິສຸດສຳລັບພຣະຜູ້ເປັນເຈົ້າຂອງ
ພວກທ່ານ ພວກທ່ານບໍ່ຕ້ອງຮ້ອງໄຫ້ຄ່ຳຄວນ
10 ດຽວນີ້ ໃຫ້ພວກທ່ານພາກັນກັບເມືອກິນເຂົ້າສາ ຈົ່ງແບ່ງປັນອາຫານແລະນ້ຳອະງຸ່ນໃຫ້ຜູ້ທີ່ບໍ່ມີພຽງພໍ ວັນນີ້
ເປັນວັນບໍຣິສຸດສຳລັບພຣະຜູ້ເປັນເຈົ້າ ສະນັ້ນ ບໍ່ຕ້ອງໂສກເສົ້າ ຄວາມຊື່ນບານທີ່ພຣະຜູ້ເປັນເຈົ້າຊົງປະທານ
ໃຫ້ພວກທ່ານນັ້ນ ຈະທຳໃຫ້ພວກທ່ານມີເຫື່ອແຮງຂຶ້ນ”
11 ພວກເລວີໄດ້ຍ່າງໄປມາຖ້າມກາງປະຊາຊົນ ແລະທຳໃຫ້ເຂົາງຽບໂດຍເວົ້າວ່າ, “ພາກັນມິດ ແລະຢ່າໄດ້ໂສກ
ເສົ້າ ເພາະວ່າວັນນີ້ເປັນວັນບໍຣິສຸດ
12 ດັ່ງນັ້ນ ປະຊາຊົນຈຶ່ງກັບເມືອບ້ານແລ້ວກິນເຂົ້າດື່ມນ້ຳຢ່າງມ່ວນຊື່ນ ພວກເຂົາໄດ້ແບ່ງປັນສິ່ງທີ່ເຂົາມີໃຫ້ແກ່
ຄົນອື່ນ ເພາະວ່າພວກເຂົາເຂົ້າໃຈຕາມທີ່ໄດ້ຟັງທ່ານອ່ານນັ້ນ

**ງານສລອງຢູ່ຕູບ**

The Festival of Booths Celebrated

(ລລວ 23:33-43)

13 ວັນຕໍ່ມາ ພວກຫົວໜ້າເຜົ່າພ້ອມດ້ວຍປະໂຣຫິດ ແລະພວກເລວີ ໄດ້ພາກັນໄປສຶກສາພຣະທັມນຳ ເອັຊຣາ
14 ພວກເຂົາໄດ້ຮູ້ເຫັນວ່າ ພຣະທັມທີ່ພຣະຜູ້ເປັນເຈົ້າຊົງມອບໃຫ້ຜ່ານທາງໂມເຊ ສັ່ງໃຫ້ເຂົາຢູ່ໃນຕູບຊົ່ວຄາວ
ເມື່ອງໃນໂອກາດງານສລອງເດືອນທີເຈັດນັ້ນ
15 ແລ້ວພວກເຂົາກໍສັ່ງຄຳແນະນຳອອກໄປທົ່ວນະຄອນເຢຣູຊາເລັມ ແລະທົ່ວຫົວເມືອງ ແລະບ້ານຕ່າງໆວ່າ, “ຈົ່ງ
ອອກໄປເບື້ອງພູດອຍ ແລ້ວເອົາງ່າໄມ້ຕົ້ນໝາກກອກ ງ່າຕົ້ນສົນ ງ່າຕົ້ນໄມ້ຫອມ ງ່າຕົ້ນຕານ ແລະຕົ້ນໄມ້
ອື່ນໆມາເຮັດຕູບຕາມຄຳແນະນຳທີ່ຂຽນໄວ້ໃນພຣະທັມ”
16 ດັ່ງນັ້ນປະຊາຊົນຈຶ່ງເອົາງ່າໄມ້ມາທຳຕູບຢູ່ເທິງຫລັງຄາພຽງ ຢູ່ຕາມເດີ່ນພຣະວິຫານ ແລະຕາມບ່ອນໃກ້ປະຕູ
ນ້ຳ ແລະໃກ້ປະຕູເອຟຣາອິມ

17 ປະຊາຊົນທຸກຄົນທີ່ກັບມາຈາກການເປັນຊະເລີຍກໍໄດ້ພາກັນປຸກຕູບ ແລະຢູ່ໃນຕູບນັ້ນ ນັບຕັ້ງແຕ່ສມັຍຂອງ ໂຢຊວຍບຸດນູນນັ້ນ ແມ່ນຄັ້ງທໍາອິດທີ່ເຮັດຢ່າງນີ້ ທຸກຄົນຕ່າງກໍຕື່ນເຕັ້ນຍິນດີ

18 ພວກເຂົາອ່ານພຣະທັມຂອງພຣະຜູ້ເປັນເຈົ້າທຸກໆວັນ ຕັ້ງແຕ່ວັນທໍາອິດຈົນເຖິງວັນສຸດທ້າຍ ພວກເຂົາສເລີມ ສລອງເຈັດວັນ ສ່ວນໃນວັນທີແປດເປັນພິທີອັດຕາມຄໍາແນະນໍາ

## 9 ຄໍາສາຣະພາບຂອງເອັຊຣາ ເຣື່ອງບາບຂອງອິສຣາເອນ

National Confession

1 ໃນວັນທີຊາວສີ່ເດືອນນີ້ ປະຊາຊົນອິສຣາເອນໄດ້ຊຸມນຸມກັນຖືສິນອົດອາຫານ ແລະນຸ່ງທີ່ມຜ້າກະສອບ ແລະ ເອົາດິນໃສ່ຫົວ

2 ຄົນອິສຣາເອນໄດ້ແຍກຕົນອອກຈາກຊົນຕ່າງຊາດ ແລະຢືນສາຣະພາບບາບຂອງຕົນ ແລະສາຣະພາບກັມຊົ່ວ ແຫ່ງບັນພະບຸຣຸດຂອງເຂົາ

3 ແລະເຂົາລຸກຂຶ້ນໃນທີ່ຂອງເຂົາ ແລະອ່ານທັມບັນຍັດຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາຢູ່ສາມຊົ່ວໂມງ ອີກສາມຊົ່ວໂມງເຂົາສາຣະພາບ ແລະນະມັສການພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາທັງຫລາຍ

4 ເຢຊູອາ ບານີ ກັດມີເອນ ເຊບານີຢາ ບູນນີ ເຊເຣບີຢາ ບານີ ແລະເຄນານີ ໄດ້ຢືນຂຶ້ນທີ່ຂັ້ນໄດຂອງຄົນເລວີ ແລະເຂົາໄດ້ຮ້ອງດ້ວຍສຽງດັງຕໍ່ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຂົາ

5 ແລ້ວຄົນເລວີ ເຢຊູອາ ກັດມີເອນ ບານີ ຮາຊັບເນຢາ ເຊເຣບີຢາ ໂຮດີຢາ ເຊບານີຢາ ແລະເປທາຮີຢາ ກ່າວ ວ່າ, "ຈົ່ງຢືນຂຶ້ນ ແລະສັຣເສີນພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານທັງຫລາຍ ຕັ້ງແຕ່ນິຣັນດອນຈົນເຖິງນິຣັນນະ ການ" ສາທຸການແດ່ພຣະນາມອັນຮຸ່ງເຮືອງຂອງພຣະອົງ ຊຶ່ງຍິ່ງໃຫຍ່ເໜືອການໂມທະນາແລະການສັຣເສີນ ທັງປວງ

6 ພຣະອົງຄືພຣະຜູ້ເປັນເຈົ້າ ພຣະອົງອົງດຽວ ພຣະອົງໄດ້ຊົງສ້າງຟ້າສວັນ ຟ້າສວັນອັນສູງສຸດພ້ອມກັບບໍຣິວານ ທັງສິ້ນຂອງຟ້າສວັນນັ້ນ ແຜ່ນດິນໂລກແລະບັນດາສິ່ງທີ່ຢູ່ໃນນັ້ນ ທະເລແລະບັນດາສິ່ງທີ່ຢູ່ໃນນັ້ນ ແລະພຣະ ອົງຊົງຮັກສາສິ່ງທັງປວງເຫລົ່ານັ້ນໄວ້ ແລະບໍຣິວານຂອງຟ້າສວັນໄດ້ນະມັສການພຣະອົງ

7 ພຣະອົງຄືພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງເລືອກອັບຣາມ ແລະຊົງນໍາທ່ານອອກມາຈາກເມືອງອູຣ໌ແຫ່ງປະເທດ ຄັນເດອານ ແລະຊົງປະທານນາມທ່ານວ່າ ອັບຣາຮາມ

8 ແລະພຣະອົງຊົງເຫັນວ່ານໍ້າໃຈຂອງທ່ານຊື່ສັດຕໍ່ພຣະອົງ ແລະພຣະອົງໄດ້ຊົງປະທານແຜ່ນດິນຂອງຄົນການາ ອານ ຄົນຮິດຕີ ຄົນອາໂມຣິດ ຄົນເປຣີສຊີ ຄົນເຢບຸສ ແລະຄົນກີຣ໌ກາຊີ ໃຫ້ແກ່ເຊື້ອສາຍຂອງທ່ານ ແລະພຣະ ອົງຊົງກະທໍາໃຫ້ພັນທະສັນຍາຂອງພຣະອົງສໍາເຣັດ ເພາະພຣະອົງຊອບທັມ

9 "ແລະພຣະອົງທອດພຣະເນດຄວາມທຸກໃຈຂອງບັນພະບຸຣຸດຂອງຂ້າພຣະອົງໃນເອຢິບ ແລະຟັງສຽງຮ້ອງທຸກ ຂອງເຂົາທັງຫລາຍທີ່ທະເລແດງ

10 ແລະພຣະອົງຊົງກະທໍາໝາຍສໍາຄັນ ແລະການອັສຈັນສູ້ຟາຣາໂອ ແລະຂ້າຣາຊການທັງສິ້ນ ແລະຕໍ່ປະຊາຊົນ ທັງສິ້ນແຫ່ງແຜ່ນດິນຂອງຟາຣາໂອ ເພາະພຣະອົງຊົງຊາບວ່າເຂົາທັງຫລາຍໄດ້ປະພຶດຢ່າງຊົ່ວຮ້າຍຕໍ່ບັນພະບຸ ຣຸດຂອງຂ້າພຣະອົງ ແລະພຣະນາມຂອງພຣະອົງກໍຊ່າລືໄປດັ່ງທຸກວັນນີ້

11 ແລະພຣະອົງໄດ້ຊົງແຍກທະເລຕໍ່ໜ້າເຂົາທັງຫລາຍ ເຂົາຈຶ່ງເດີນໄປກາງທະເລດິນແຫ້ງ ແລະພຣະອົງໄດ້ຊົງ ແກວ່ງຜູ້ໄລ່ຕາມເຂົາທັງຫລາຍລົງໃນທີ່ເລິກຢ່າງກັບຊົງແກວ່ງກ້ອນຫີນລົງໄປໃນມະຫາສະໝຸດ

12 ນອກຈາກນີ້ ພຣະອົງຊົງນໍາເຂົາໃນກາງເວັນດ້ວຍເສົາເມກ ແລະໃນກາງຄືນດ້ວຍເສົາໄຟ ເພື່ອໃຫ້ແສງແກ່ເຂົາ ໃນທາງທີ່ເຂົາຄວນຈະໄປ

13 ພຣະອົງສະເດັດລົງມາເທິງພູຊີນາອີ ແລະກ່າວກັບເຂົາຈາກຟ້າສວັນ ແລະປະທານກົດຫມາຍອັນຊອບແລະ
ທັມ ແລະໄດ້ມອບພຣະບັນຍັດທີ່ດີແກ່ເຂົາ ທັງຄໍາສັ່ງສອນທີ່ມີຫລັກແກ່ເຂົາ
14 ພຣະອົງຊົງໃຫ້ເຂົາຊາບເຖິງວັນສະບາໂຕບໍຣິສຸດຂອງພຣະອົງ ແລະຊົງຕຣາພຣະບັນຍັດກົດເກນ ແລະທັມບັນ
ຍັດຜ່ານທາງໂມເຊຜູ້ຮັບໃຊ້ຂອງພຣະອົງ
15 ພຣະອົງປະທານອາຫານແກ່ເຂົາຈາກຟ້າສວັນແກ້ຄວາມຫິວ ແລະຊົງນໍານໍ້າອອກມາຈາກກ້ອນຫີນໃຫ້ເຂົາແກ
້ຫິວກະຫາຍ ແລະພຣະອົງຊົງສັ່ງໃຫ້ເຂົາເຂົ້າໄປຍຶດຄອງແຜ່ນດິນຊຶ່ງພຣະອົງຊົງສັນຍາວ່າຈະປະທານໃຫ້ເຂົາ
ນັ້ນ
16 “ແຕ່ເຂົາທັງຫລາຍຄື ບັນພະບຸຣຸດຂອງຂ້າພຣະອົງທັງຫລາຍໄດ້ປະພຶດຢ່າງອວດຕົວແລະແຂງຄໍຂອງເຂົາເສັຽບໍ່
ໄດ້ເຊື່ອຟັງພຣະບັນຍັດຂອງພຣະອົງ
17 ເຂົາທັງຫລາຍປະຕິເສດບໍ່ເຊື່ອຟັງ ແລະບໍ່ເອົາໃຈໃສ່ໃນການອັສຈັນຊຶ່ງພຣະອົງຊົງປະກອບຂຶ້ນຖ້າມກາງເຂົາ
ແຕ່ເຂົາແຂງຄໍຂອງເຂົາ ແລະໄດ້ແຕ່ງຕັ້ງຫົວຫນ້າເພື່ອຈະກັບໄປສູ່ຄວາມເປັນທາດໃນເອຢິບ ແຕ່ພຣະອົງຊົງ
ເປັນພຣະເຈົ້າພ້ອມທີ່ຈະຊົງໃຫ້ອະພັຍ ມີພຣະທັຍເມດຕາ ແລະກະຣຸນາ ຊົງພຣະພິໂຣດຊ້າ ແລະຊົງອຸດົມ
ດ້ວຍຄວາມຮັກຫມັ້ນຄົງ ແລະບໍ່ໄດ້ຊົງປະປ່ອຍເຂົາທັງຫລາຍ
18 ເຖິງແມ່ນວ່າເຂົາທັງຫລາຍໄດ້ສ້າງຮູບງົວຫລໍ່ໄວ້ສໍາລັບຕົວແລະກ່າວວ່າ, “ນີ້ຄືພຣະເຈົ້າຂອງເຮົາ ຜູ້ຊົງນໍາເຮົາ
ຂຶ້ນມາຈາກເອຢິບ” ແລະໄດ້ກະທໍາການຫມິ່ນປມາດຢ່າງໃຫຍ່ຫລວງ
19 ດ້ວຍພຣະກະຣຸນາຊັບຊ້ອນຂອງພຣະອົງ ພຣະອົງກໍບໍ່ໄດ້ຊົງປະປ່ອຍເຂົາໃນຖິ່ນກັນດານ ເສົາເມກຊຶ່ງນໍາເຂົາ
ໃນກາງເວັນບໍ່ໄດ້ພາກຈາກເຂົາໄປ ຫລືເສົາໄຟໃນກາງຄືນຊຶ່ງໃຫ້ແສງແກ່ເຂົາຕາມທາງຊຶ່ງເຂົາຄວນຈະໄປກໍບໍ່
ໄດ້ຂາດໄປ
20 ພຣະອົງປະທານພຣະວິນຍານໃຫ້ສັ່ງສອນເຂົາ ແລະບໍ່ໄດ້ຊົງຢັບຢັ້ງມານາຂອງພຣະອົງອອກຈາກປາກຂອງ
ເຂົາທັງຫລາຍ ແລະປະທານນໍ້າແກ້ຫິວກະຫາຍຂອງເຂົາ
21 ພຣະອົງຊົງຊຸບລ້ຽງເຂົາທັງຫລາຍໃນຖິ່ນກັນດານສີ່ສິບປີ ແລະເຂົາບໍ່ໄດ້ຂາດສິ່ງໃດເລີຍ ເສື້ອຜ້າຂອງເຂົາບໍ່
ຂາດແລ່ງ ແລະຕີນຂອງເຂົາບໍ່ໄດ້ບວມ
22 ແລະພຣະອົງຊົງມອບຣາຊອານາຈັກ ແລະຊົນຊາດທັງຫລາຍແກ່ເຂົາ ແລະຊົງປັນໃຫ້ເຂົາຕາມເຂດແດນ ເຂົາ
ຈຶ່ງໄດ້ຍຶດແຜ່ນດິນແຫ່ງຊີໂຮນກະສັດແຫ່ງເຮັສໂບນ ແລະແຜ່ນດິນຂອງໂອກກະສັດແຫ່ງເມືອງບາຊານ
23 ພຣະອົງຊົງທະວີເຊື້ອສາຍຂອງເຂົາເຫມືອນດວງດາວແຫ່ງຟ້າສວັນ ແລະພຣະອົງຊົງນໍາເຂົາເຂົ້າໄປໃນແຜ່ນ
ດິນຊຶ່ງພຣະອົງໄດ້ສັ່ງບັນພະບຸຣຸດຂອງເຂົາໃຫ້ເຂົ້າໄປຍຶດນັ້ນ
24 ເຊື້ອສາຍເຫລົ່ານັ້ນຈຶ່ງເຂົ້າໄປ ແລະຍຶດແຜ່ນດິນນັ້ນ ພຣະອົງຊົງປາບປາມຊາວແຜ່ນດິນນັ້ນ ຄືຄົນການາອານ
ໃຫ້ພົ້ນຫນ້າເຂົາ ແລະຊົງມອບເຂົາທັງຫລາຍໄວ້ໃນມືຂອງເຂົາ ພ້ອມກັບກະສັດແລະຊົນຊາດທັງຫລາຍແຫ່ງ
ແຜ່ນດິນນັ້ນ ໃຫ້ໄດ້ກະທໍາແກ່ຄົນເຫລົ່ານັ້ນຕາມໃຈຊອບຂອງເຂົາ
25 ແລະເຂົາຈຶ່ງເຂົ້າຍຶດຫົວເມືອງທີ່ມີປ້ອມ ແລະແຜ່ນດິນອຸດົມ ແລະຖືກໍາມະສິດເຮືອນຊຶ່ງເຕັມດ້ວຍຂອງດີທັງ
ປວງ ທັງທີ່ຂັງນໍ້າຊຶ່ງສະກັດໄວ້ ສວນອະງຸ່ນ ສວນຫມາກກອກ ແລະຕົ້ນໄມ້ທີ່ມີຫມາກຫລວງຫລາຍ ເຂົາຈຶ່ງໄດ້
ກິນອີ່ມຈົນອ້ວນ ແລະປິຕິຍິນດີໃນພຣະຄຸນຍິ່ງຂອງພຣະອົງ
26 “ເຖິງຢ່າງໃດກໍດີ ເຂົາດື້ ແລະໄດ້ກະບົດຕໍ່ພຣະອົງ ແກວ່ງທັມບັນຍັດຂອງພຣະອົງໄວ້ເບື້ອງຫລັງ ແລະໄດ້ຂ້າຜູ້
ປະກາດພຣະທັມຂອງພຣະອົງ ຜູ້ຊຶ່ງໄດ້ຕັກເຕືອນເຂົາເພື່ອໃຫ້ເຂົາກັບມາຫາພຣະອົງ ແລະເຂົາກະທໍາ
ການຫມິ່ນປະຫມາດຢ່າງໃຫຍ່ຫລວ

27 ເພາະສະນັ້ນພຣະອົງຊົງມອບເຂົາໄວ້ໃນມືສັດຕຣູຂອງເຂົາ ຜູ້ຊຶ່ງກະທຳໃຫ້ເຂົາທົນທຸກ ແລະໃນເວລາແຫ່ງ
ການທົນທຸກຂອງເຂົານັ້ນ ເຂົາຮ້ອງທູນຕໍ່ພຣະອົງ ແລະພຣະອົງຊົງຟັງເຂົາຈາກຟ້າສວັນ ພຣະອົງໄດ້ປະທານ
ບັນດາຜູ້ຊ່ອຍແກ່ເຂົາ ຜູ້ໄດ້ຊ່ອຍເຂົາໃຫ້ພົ້ນຈາກມືສັດຕຣູຂອງເຂົາ ຕາມພຣະກະຣຸນາຊັບຊ້ອນຂອງພຣະອົງ
28 ແຕ່ເມື່ອເຂົາພັກສງົບແລ້ວ ເຂົາກໍກະທຳຄວາມຊົ່ວຕໍ່ພຣະພັກພຣະອົງອີກ ພຣະອົງຈຶ່ງຊົງສລະເຂົາໄວ້ໃນມືສັດ
ຕຣູຂອງເຂົາ ສັດຕຣູຈຶ່ງໄດ້ປົກຄອງເຂົາ ເຖິງປານນັ້ນເມື່ອເຂົາຫັນມາຮ້ອງທູນຕໍ່ພຣະອົງ ພຣະອົງຊົງຟັງເຂົາ
ຈາກຟ້າສວັນ ແລະພຣະອົງຊົງຊ່ອຍກູ້ເຂົາໄວ້ຫລາຍຄັ້ງຫລາຍຫົນ ຕາມພຣະກະຣຸນາຂອງພຣະອົງ
29 ແລະພຣະອົງຊົງຕັກເຕືອນເຂົາ ເພື່ອວ່າຈະຊົງຫັນເຂົາໃຫ້ກັບຄືນມາສູ່ທັມບັນຍັດຂອງພຣະອົງ ແຕ່ເຂົາກໍຍັງປະ
ພຶດຢ່າງ ອວດອົ່ງ ອວດດີ ບໍ່ຍອມເຊື່ອຟັງພຣະບັນຍັດຂອງພຣະອົງ ແຕ່ໄດ້ກະທຳຜິດຕໍ່ກົດຫມາຍຂອງພຣະອົງ
(ອັນເປັນຂໍ້ປະຕິບັດຊຶ່ງມະນຸດຈະດຳຣົງຊີພຢູ່ໄດ້) ແລະໄດ້ຫັນບ່າດື້ ແລະຄໍແຂງເຂົ້າສູ້ ແລະບໍ່ໄດ້ເຊື່ອຟັງ
30 ພຣະອົງຊົງອົດທົນກັບເຂົາຢູ່ຫລາຍປີ ແລະຊົງເຕືອນເຂົາດ້ວຍພຣະວິນຍານຂອງພຣະອົງທາງຜູ້ປະກາດພຣະ
ທັມຂອງພຣະອົງ ເຂົາກໍຍັງບໍ່ງ່ຽງຫູຟັງ ເພາະສະນັ້ນພຣະອົງຈຶ່ງຊົງມອບເຂົາໄວ້ໃນມືຂອງຊົນຊາດທັງຫລາຍ
ແຫ່ງແຜ່ນດິນນັ້ນ
31 ເຖິງປານນັ້ນດ້ວຍພຣະກະຣຸນາຊັບຊ້ອນຂອງພຣະອົງ ພຣະອົງບໍ່ໄດ້ກະທຳໃຫ້ເຂົາພິນາດ ຫລືປະປ່ອຍເຂົາໄປ
ເພາະພຣະອົງຊົງເປັນພຣະເຈົ້າຜູ້ຊົງພຣະເມດຕາແລະພຣະກະຣຸນາ
32 “ຂ້າແດ່ພຣະເຈົ້າຂອງຂ້າພຣະອົງທັງຫລາຍ ຊຶ່ງເປັນພຣະເຈົ້າຜູ້ຍິ່ງໃຫຍ່ ຊົງຣິດ ແລະຫນ້າເກງກົວ ຜູ້ຊົງຮັກສາ
ຄຳຫມັ້ນ ສັນຍາ ແລະຄວາມຮັກຫມັ້ນຄົງ ສະນັ້ນຂໍພຣະອົງຢ່າຊົງເຫັນວ່າຄວາມທຸກຍາກລຳບາກທັງສິ້ນນັ້ນ
ເປັນແຕ່ພຽງເລັກນ້ອຍຊຶ່ງບັງເກີດຂຶ້ນກັບຂ້າພຣະອົງທັງຫລາຍ ກັບບັນດາພຣະຣາຊາຂອງຂ້າພຣະອົງ ກັບບັນ
ດາເຈົ້ານາຍ ບັນດາປະໂຣຫິດ ບັນດາຜູ້ປະກາດພຣະທັມ ບັນພະບຸຣຸດ ແລະຊົນຊາດຂອງພຣະອົງທັງສິ້ນ ຕັ້ງ
ແຕ່ສມັຍກະສັດອັສຊີເຣັຽຈົນເຖິງວັນນີ້
33 ແຕ່ໃນບັນດາສິ່ງທີ່ເກີດຂຶ້ນແກ່ຂ້າພຣະອົງທັງຫລາຍ ພຣະອົງຍຸດຕິທັມ ເພາະພຣະອົງຊົງປະກອບກິດຢ່າງທ່ຽງ
ຕົງ ແຕ່ຂ້າພຣະອົງທັງຫລາຍປະພຶດຢ່າງອະທັມ
34 ບັນດາພຣະຣາຊາ ເຈົ້ານາຍ ປະໂຣຫິດ ແລະບັນພະບຸຣຸດຂອງຂ້າພຣະອົງ ບໍ່ໄດ້ຮັກສາທັມບັນຍັດ ຫລືເຊື່ອຟັງ
ພຣະບັນຍັດຂອງພຣະອົງ ແລະພຣະໂອວາດຂອງພຣະອົງຊຶ່ງພຣະອົງຊົງເຕືອນເຂົາ
35 ເພາະເຂົາທັງຫລາຍບໍ່ໄດ້ບົວລະບັດພຣະອົງໃນຣາຊອານາຈັກຂອງເຂົາ ແຕ່ພຣະຄຸນອັນຍິ່ງຂອງພຣະອົງ ພຣະ
ອົງຊົງປະທານແກ່ເຂົາ ແລະແຜ່ນດິນທີ່ໃຫຍ່ອຸດົມ ພຣະອົງຊົງຍົກໃຫ້ເຂົາ ແລະເຂົາບໍ່ໄດ້ຫັນກັບຄືນຈາກການ
ຊົ່ວຮ້າຍຂອງເຂົາ
36 ເບິ່ງແມ່, ວັນນີ້ຂ້າພຣະອົງທັງຫລາຍເປັນທາດ ເປັນທາດໃນແຜ່ນດິນທີ່ພຣະອົງປະທານແກ່ບັນພະບຸຣຸດຂອງ
ຂ້າພຣະອົງທັງຫລາຍ ເພື່ອໃຫ້ໄດ້ຮັບປະທານພຶດຜົນກັບຂອງອັນດີຂອງມັນ
37 ແລະຜະລິດຜົນອັນມາກມາຍຂອງແຜ່ນດິນນັ້ນກໍຕົກແກ່ພຣະຣາຊາຜູ້ທີ່ພຣະອົງຊົງຕັ້ງໄວ້ເຫນືອຂ້າພຣະອົງທັງ
ຫລາຍດ້ວຍເຫດບາບຂອງຂ້າພຣະອົງທັງຫລາຍ ເຂົາທັງຫລາຍມີອຳນາດເຫນືອຮ່າງກາຍແລະເຫນືອຝູງສັດ
ຂອງຂ້າພຣະອົງທັງຫລາຍຕາມຄວາມພໍໃຈຂອງເຂົາທັງຫລາຍ ແລະຂ້າພຣະອົງທັງຫລາຍທຸກຫນັກຫລາຍ
ແທ້ໆ”

### Those who Signed the Covenant

38 ເຫດສິ່ງເຫລົ່ານີ້ເຮົາທັງຫລາຍຈຶ່ງກະທຳຄຳສັນຍາຫມັ້ນຄົງ ແລະບັນທຶກໄວ້ ເຈົ້ານາຍ ຄົນເລວີ ແລະປະໂຣຫິດ
ຂອງເຮົາທັງຫລາຍ ຈຶ່ງປະທັບຕຣາຂອງເຂົາໄວ້

# 10

Chapter 10

1 ບັນດາຜູ້ທີ່ປະທັບຕຣາຂອງເຂົາໄວ້ຄື ເນເຫມີຜູ້ວ່າຣາຊການ ຜູ້ເປັນບຸດຮາດາລີຢາ ແລະເຊເດກີຢາ

2 ເຊຣັຍຢາ ອາຊາຣີຢາ ເຢເຣມີຢາ

3 ປັສຮູຣ໌ ອາມາຣີຢາ ມັນຄີຢາ

4 ຮັດຕູສ ເຊບານີຢາ ມັນລຸກ

5 ຮາຣິມ ເມເຣໂມດ ໂອບາດີຢາ

6 ດານີເອນ ກິນເນໂທນ ບາຣູກ

7 ເມຊູນລາມ ອາບີຢາ ມີຢາມິນ

8 ມາອາຊີຢາ ບິນກັນ ເຊມັຍຢາ ຄົນເຫລົ່ານີ້ເປັນປະໂຣຫິດ

9 ແລະຄົນເລວີ ຄື ເຢຊູອາບຸອາຊານີຢາ ບິນນູຍເຊື້ອສາຍເຮນາດາດ ກັດມີເອນ

10 ແລະພີ່ນ້ອງຂອງເຂົາ ເຊບານີຢາ ໂຮດີຢາ ເກລີຕາ ເປລັຍຢາ ຮານານ

11 ມີກາ ເຣໂຮບ ຮາຊາບີຢາ

12 ຊັກກູຣ໌ ເຊເຣບີຢາ ເຊບານີຢາ

13 ໂຮດີຢາ ບານີ ເບນີນູ

14 ບັນດາຫົວຫນ້າຂອງປະຊາຊົນ ຄື ປາໂຣສ ປາຮັທໂມອາບ ເອລາມ ຊັດຕູ ບານີ

15 ບູນນີ ອັສກາດ ເບບັຍ

16 ອາໂດນີຢາ ບີກວັຍ ອາດິນ

17 ອາເຕີ ເຮເຊກີຢາ ອັສຊູຣ໌

18 ໂຮດີຢາ ຮາຊູມ ເບຊັຍ

19 ຮາຣີບ ອານາໂທດ ເນບັຍ

20 ມັກປີອັສ ເມຊູນລາມ ເຮຊູອາ

21 ເມເຊຊາເບນ ຊາໂດກ ຢັດດູອາ

22 ເປລາຕີຢາ ຮານານ ອານັຍຢາ

23 ໂຮເຊອາ ຮານານີຢາ ຮັສຊູບ

24 ຮານໂລເຮສ ປິນຮາ ໂຊເບກ

25 ເຣຮູມ ຮາຊັບນາ ມາອາຊັຍຢາ

26 ອາຮີຢາ ຮານານ ອານານ

27 ມັນລຸກ ຮາຣິມ ແລະບາອານາ

Summary of the Covenant

28 ສ່ວນປະຊາຊົນນອກນັ້ນ ບັນດາປະໂຣຫິດ ຄົນ
ເລວີ ຄົນເຝົ້າປະຕູ ນັກຮ້ອງ ຄົນໃຊ້ປະຈຳພຣະ
ວິຫານ ແລະຄົນທັງປວງຜູ້ທີ່ໄດ້ແຍກຕົວອອກຈາກຊົນຊາດທັງຫລາຍຂອງແຜ່ນດິນເຫລົ່ານັ້ນ ມາຖືທັມບັນຍັດ
ຂອງພຣະເຈົ້າ ທັງພັຣຍາຂອງເຂົາ ບຸດຊາຍບຸດຍິງຂອງເຂົາ ແລະຄົນທັງປວງຜູ້ມີຄວາມຮູ້ແລະຄວາມເຂົ້າໃຈ
29 ໄດ້ສົມທົບກັບພີ່ນ້ອງຂອງເຂົາ ກັບຂຸນນາງຂອງເຂົາ ໄດ້ເຂົ້າໃນການສາບານແລະປະຕິຍານທີ່ຈະດຳເນີນຕາມ
ທັມບັນຍັດຂອງພຣະເຈົ້າ ແລະທີ່ຈະປະຕິບັດ ແລະກະທຳຕາມພຣະບັນຍັດຂອງພຣະຜູ້ເປັນເຈົ້າອົງພຣະເຈົ້
າຂອງເຮົາ ແລະຕາມກົດຫມາຍແລະກົດເກນຂອງພຣະອົງ

30 ແລະເຮົາທັງຫລາຍຈະບໍ່ຍົກບຸດຍິງຂອງເຮົາໃຫ້ແກ່ຊົນຊາດທັງຫລາຍຂອງແຜ່ນດິນນັ້ນ ແລະບໍ່ຮັບບຸດຍິງຂອງເຂົາທັງຫລາຍໃຫ້ແກ່ບຸດຊາຍຂອງເຮົາ
31 ແລະຖ້າຊົນຊາດທັງຫລາຍຂອງແຜ່ນດິນນັ້ນນຳເຄື່ອງໃຊ້ຫລືເຂົ້າຢ່າງໃດໆມາຂາຍໃນວັນສະບາໂຕ ເຮົາຈະບໍ່ຊື້ຈາກເຂົາໃນວັນສະບາໂຕຫລືໃນວັນບໍຣິສຸດ ແລະເຮົາຈະບໍ່ເກັບຜົນຂອງປີທີເຈັດ ແລະບໍ່ເກັບຫນີ້ສິນທຸກຢ່າງ
32 ເຮົາທັງຫລາຍກຳນົດໄວ້ວ່າ ຈະໃຫ້ຄິດກັບຕົວເຮົາເປັນຣາຍປີໃຫ້ເສັງຄົນລະຈຳນວນນຶ່ງສ່ວນສາມເຊເກລ ເພື່ອການບົວລະບັດໃນພຣະວິຫານຂອງພຣະເຈົ້າຂອງເຮົາ
33 ຄືໃຫ້ເປັນຣາຄາເຂົ້າຈີ່ຕັ້ງຖວາຍ ທັນຍາບູຊາ ເຄື່ອງເຜົາບູຊາແຕ່ລະມື້ ສຳລັບສະບາໂຕຕ່າງວັນຂຶ້ນນຶ່ງຄໍ່າ ເທສການລ້ຽງຕ່າງໆ ສິ່ງຂອງບໍຣິສຸດ ແລະເຄື່ອງບູຊາໄຖ່ບາບ ເພື່ອທຳການລ້າງມົນທິນບາບຂອງພວກອິສຣາເອນ ສຳລັບງານທຸກຢ່າງໃນພຣະວິຫານຂອງພຣະເຈົ້າຂອງເຮົາທັງຫລາຍ
34 ເຮົາໄດ້ຈັບສລາກດ້ວຍ ຄືບັນດາປະໂຣຫິດ ຄົນເລວີ ແລະປະຊາຊົນທັງຫລາຍເພື່ອເອົາຟືນຖວາຍ ນຳເຂົ້າມາໃນພຣະວິຫານຂອງພຣະເຈົ້າຂອງເຮົາ ຕາມຕະກູນຂອງເຮົາ ຕາມເວລາກຳນົດ ເປັນປີໆໄປເພື່ອເຜົາເທິງແທ່ນບູຊາແຫ່ງພຣະຜູ້ເປັນເຈົ້າ
ພຣະເຈົ້າຂອງເຮົາ ຕາມທີ່ບັນທຶກໄວ້ໃນທັມບັນຍັດ
35 ເຮົາຜູກມັດຕົວເຮົາໄວ້ທີ່ຈະນຳຜົນແຮກແຫ່ງທີ່ດິນຂອງເຮົາ ແລະຜົນແຮກຂອງຜົນຕົ້ນໄມ້ທັງສິ້ນທຸກປີ ມາຍັງພຣະວິຫານຂອງພຣະເຈົ້າ
36 ແລະຈະນຳບຸດຊາຍຫົວປີ ແລະສັດຫົວປີຂອງເຮົາ ຕາມທີ່ບັນທຶກໄວ້ໃນທັມບັນຍັດ ແລະຫົວປີແຫ່ງຝູງງົວ ແລະຝູງແບ້ແກະຂອງເຮົາມາຍັງພຣະວິຫານຂອງພຣະເຈົ້າຂອງເຮົາ ຍັງປະໂຣຫິດ ຜູ້ບົວລະບັດຢູ່ໃນພຣະວິຫານແຫ່ງພຣະເຈົ້າຂອງເຮົາ
37 ແລະຈະນຳຍອດແປ້ງປຽກຂອງເຮົາສິ່ງບໍຣິຈາກຂອງເຮົາ ຜົນຫມາກຂອງຕົ້ນໄມ້ທຸກຕົ້ນ ເຫລົ້າອະງຸ່ນໃຫມ່ແລະນ້ຳມັນ ມາຍັງບັນດາປະໂຣຫິດ ມາຍັງຫ້ອງພຣະວິຫານຂອງພຣະເຈົ້າຂອງເຮົາ ແລະທີ່ຈະນຳນຶ່ງສ່ວນສິບຈາກແຜ່ນດິນ ຂອງເຮົາມາໃຫ້ຄົນເລວີ ເພາະຄົນເລວີເປັນຜູ້ເກັບເອົານຶ່ງສ່ວນສິບຈາກຫົວເມືອງຊົນນະບົດທັງສິ້ນຂອງເຮົາ
38 ປະໂຣຫິດ ເຊື້ອສາຍຂອງອາໂຣນຈະຢູ່ກັບຄົນເລວີເມື່ອຄົນເລວີໄດ້ຮັບນຶ່ງສ່ວນສິບ ແລະຄົນເລວີຈະນຳນຶ່ງສ່ວນສິບຂອງນຶ່ງສ່ວນສິບມາຍັງ ພຣະວິຫານຂອງພຣະເຈົ້າຂອງເຮົາ ມາຍັງຫ້ອງ ຍັງຄັງພັສດຸ
39 ເພາະປະຊາຊົນອິສຣາເອນແລະເຊື້ອສາຍເລວີຈະນຳສ່ວນບໍຣິຈາກ ຄື ເຂົ້າ ເຫລົ້າອະງຸ່ນໃຫມ່ແລະນ້ຳມັນ ມາຍັງຫ້ອງຊຶ່ງເປັນບ່ອນທີ່ເກັບເຄື່ອງໃຊ້ຂອງສະຖານນະມັສການ ແລະທີ່ຢູ່ຂອງປະໂຣຫິດຜູ້ບົວລະບັດແລະຄົນເຝົ້າປະຕູແລະນັກຮ້ອງ ເຮົາຈະບໍ່ເພີກເສີຍຕໍ່ພຣະວິຫານຂອງພຣະເຈົ້າຂອງເຮົາ

## 11 ຜູ້ທີ່ມີພູມລຳເນົາຢູ່ໃນເຢຣູຊາເລັມ

Population of the City Increased

1 ພວກຜູ້ນຳຂອງປະຊາຊົນອາໄສຢູ່ໃນເຢຣູຊາເລັມ ແລະປະຊົນນອກນັ້ນຈັບສລາກກັນ ເພື່ອຈະນຳເອົາຄົນສ່ວນນຶ່ງໃນສິບສ່ວນໃຫ້ເຂົ້າໄປຢູ່ໃນເຢຣູຊາເລັມນະຄອນບໍຣິສຸດ ຝ່າຍອີກເກົ້າສ່ວນສິບນັ້ນໃຫ້ຢູ່ໃນຫົວເມືອງຕ່າງໆ
2 ປະຊາຊົນໄດ້ໂມທະນາແກ່ບັນດາຜູ້ທີ່ສມັກໃຈໄປຢູ່ໃນເຢຣູຊາເລັມ
3 ຕໍ່ໄປນີ້ເປັນຫົວຫນ້າມົນທົນທີ່ມາອາສັຍຢູ່ໃນເຢຣູຊາເລັມ ແຕ່ໃນຫົວເມືອງຂອງປະເທດຢູດາ ຕ່າງຄົນຕ່າງອາສັຍຢູ່ໃນທີ່ດິນຂອງຕົນໃນຫົວເມືອງຂອງຕົນຄືອິສຣາເອນ ບັນດາປະໂຣຫິດ ຄົນເລວີ ຄົນໃຊ້ປະຈຳພຣະວິຫານແລະເຊື້ອສາຍຂ້າຣາຊການຂອງໂຊໂລໂມນ

4 ບາງຄົນໃນເຊື້ອສາຍຂອງຢູດາແລະເຊື້ອສາຍຂອງເບັນຢາມິນ ອາສັຍຢູ່ໃນເຢຣູຊາເລັມ ເຊື້ອສາຍຂອງຢູດາມີອາທັຍຢາ ບຸດອຸສຊີຢາ ຜູ້ເປັນບຸດອາມາຣີຢາ ຜູ້ເປັນບຸດເຊຟາຕີຢາ ຜູ້ເປັນບຸດມາຮາລາເລນ ແຫ່ງເຊື້ອສາຍຂອງ ເປເຣສ

5 ແລະມາອາຊີຍາ ບຸດບາຣຸກ ຜູ້ເປັນບຸດໂກນໂຮເຊ ຜູ້ເປັນບຸດຮາຊີຍາ ຜູ້ເປັນບຸດອາດັຍຢາ ຜູ້ເປັນບຸດຢົວອາຣິບ ຜູ້ເປັນບຸດເຊຄາຣີຢາ ຜູ້ເປັນບຸດຊາວຊີໂລນ

6 ເຊື້ອສາຍຂອງເປເຣສທັງສິ້ນທີ່ອາສັຍຢູ່ໃນເຢຣູຊາເລັມ ມີຄົນເກັ່ງກ້າ ສີ່ຮ້ອຍຫົກສິບແປດຄົນ

7 ແລະຕໍ່ໄປນີ້ເປັນເຊື້ອສາຍເບັນຢາມິນ ຄື ຊັນລູ ບຸດເມຊູນລາມ ຜູ້ເປັນບຸດໂຢເອດ ຜູ້ເປັນບຸດເປດັຍຢາ ຜູ້ເປັນບຸດໂກລັຍຢາ ຜູ້ເປັນບຸດມາອາເຊຢາ ຜູ້ເປັນບຸດອີທີເອນ ຜູ້ເປັນບຸດເຢຊາຢາ

8 ແລະຖັດເຂົາໄປຄື ກັບບັຍ ຊັນລັຍ ມີເກົ້າຮ້ອຍຊາວແປດຄົນ

9 ໂຢເອນ ບຸດຊີກຣີ ເປັນຜູ້ດູແລເຂົາທັງຫລາຍ ແລະເຫນືອເມືອງນັ້ນ ຢູດາບຸດຮັສເຊນູອາເປັນທີສອງ

10 ຈາກບັນດາປະໂຮຫິດຄື ເຢດັຍຢາ ບຸດຢົວອາຣິບ ຢາຄິນ

11 ເຊຣັຍຢາ ບຸດຮິນກີຢາ ຜູ້ເປັນບຸດເມຊູນລາມ ຜູ້ເປັນບຸດຊາໂດກ ຜູ້ເປັນບຸດເມຣາໂຢດ ຜູ້ເປັນບຸດອາຮີຕູບ ຜູ້ປົກຄອງພຣະວິຫານຂອງພຣະເຈົ້າ

12 ແລະພີ່ນ້ອງຂອງເຂົາທີ່ທຳງານຢູ່ໃນພຣະວິຫານ ມີແປດຮ້ອຍຊາວສອງຄົນ ແລະອາດັຍຢາ ບຸດເຢໂຣຮາມ ຜູ້ເປັນບຸດເປລາລີຢາ ຜູ້ເປັນບຸດອັມຊີ ຜູ້ເປັນບຸດເຊຄາຣີຢາ ຜູ້ເປັນບຸດປັສຮູຣ໌ ຜູ້ເປັນບຸດມັນຄີຢາ

13 ແລະພີ່ນ້ອງຂອງເຂົາ ຫົວຫນ້າຂອງຕະກູນ ມີສອງຮ້ອຍສີ່ສິບສອງຄົນ ແລະອາມັສຊັຍ ບຸດ ອາຊາເຣນ ຜູ້ເປັນບຸດອາຊັຍ ຜູ້ເປັນບຸດເມຊິນເລໂມດ ຜູ້ເປັນບຸດອິມເມີ

14 ພີ່ນ້ອງຂອງເຂົາເປັນທະຫານທີ່ເກັ່ງກ້າ ມີນຶ່ງຮ້ອຍຊາວແປດຄົນ ຜູ້ດູແລຂອງເຂົາຄືຊັບດີເອນ ບຸດຮັກເກໂດລີມ

15 ຈາກຄົນເລວີຄື ເຊມັຍຢາ ບຸດຮັສຊູບ ຜູ້ເປັນບຸດອັສຣີກາມ ຜູ້ເປັນບຸດຮາຊາບີຢາ ຜູ້ເປັນບຸດບູນນີ

16 ຊັບເບທັຍ ແລະໂຢຊາບາດ ຈາກພວກຫົວຫນ້າຂອງຄົນເລວີ ຜູ້ຄວບຄຸມການງານພາຍນອກພຣະວິຫານຂອງພຣະເຈົ້າ

17 ມັດຕານີຢາ ບຸດມີກາ ຜູ້ເປັນບຸດຊັບດີ ຜູ້ເປັນບຸດອາຊັບ ຜູ້ເປັນຫົວຫນ້າໃນການເລີ້ມຕົ້ນການໂມທະນາໃນການອ້ອນວອນ ແລະບາກບູກີຢາເປັນທີສອງໃນຫມູ່ພີ່ນ້ອງຂອງເຂົາ ແລະອັບດາ ບຸດຊາມມູອາ ຜູ້ເປັນບຸດກາລານ ຜູ້ເປັນບຸດເຢດູທູນ

18 ຄົນເລວີທັງຫມົດໃນນະຄອນບໍຣິສຸດມີ ສອງຮ້ອຍແປດສິບສີ່ຄົນ

19 ຄົນເຝົ້າປະຕູມີ ອັກກູບ ຕັນໂມນ ແລະພີ່ນ້ອງຂອງເຂົາ ຜູ້ເຝົ້າບັນດາປະຕູມີ ນຶ່ງຮ້ອຍເຈັດສິບສອງຄົນ

20 ຄົນອິສຣາເອນນອກນັ້ນ ທີ່ເປັນພວກປະໂຮຫິດ ແລະຄົນເລວີ ຢູ່ໃນຫົວເມືອງທັງສິ້ນຂອງຢູດາ ທຸກຄົນຢູ່ໃນທີ່ດິນມໍຣະດົກຂອງເຂົາ

21 ແຕ່ຄົນໃຊ້ປະຈຳພຣະວິຫານຢູ່ທີ່ ໂອເຟນ ແລະຊີຮາ ແລະກິສປາ ຄວບຄຸມຄົນໃຊ້ປະຈຳພຣະວິຫານ

22 ຜູ້ດູແລຄົນເລວີໃນເຢຣູຊາເລັມຄື ອຸສຊີ ບຸດບານີ ຜູ້ເປັນບຸດຮາຊາບີຢາ ຜູ້ເປັນບຸດມັດຕານີຢາ ຜູ້ເປັນບຸດມີກາ ແຫ່ງເຊື້ອສາຍອາສາບ ນັກຮ້ອງ ດູແລການງານພຣະວິຫານຂອງພຣະເຈົ້າ

23 ເພາະມີພຣະບັນຊາຈາກພຣະຣາຊາເຖິງເຣື່ອງເຂົາ ແລະມີຂອງເປັນສ່ວນທີ່ໄດ້ຕົກລົງກັນໄວ້ສຳລັບນັກຮ້ອງຕາມທີ່ຕ້ອງການທຸກໆວັນ

24 ແລະເປທາຮີຢາ ບຸດເມເສຊາເບນ ເຊື້ອສາຍເຊຣາ ບຸດຢູດາເປັນຜູ້ຕ່າງຫນ້າຂອງພຣະຣາຊາໃນເຣື່ອງກິຈການຕ່າງອັນກ່ຽວກັບປະຊາຊົນ

Villages outside Jerusalem

25 ສ່ວນທີ່ຊົນນະບົດແລະໄຮ່ນາຂອງຊົນນະບົດເຫລົ່ານັ້ນ ປະຊາຊົນພວກຢູດາບາງຄົນອາສັຍຢູ່ໃນກີຣີອາດອາຣ໌
ບາ ແລະຊົນນະບົດຂອງເມືອງນັ້ນ ແລະໃນດີໂບນກັບຊົນນະບົດຂອງເມືອງນັ້ນ ແລະໃນເຢກັບເຊເອນກັບຊົນ
ນະບົດຂອງເມືອງນັ້ນ

26 ແລະໃນເຢຊູຊາເລັມກັບໃນໂມລາດາ ແລະເບັດເປເລດ

27 ໃນຮາຊາຣ໌ຊູອານ ໃນເບີເອີເຊບາ ແລະຊົນນະບົດຂອງເມືອງນັ້ນ

28 ໃນຊີກລາກ ໃນເມໂກນາ ແລະຊົນນະບົດຂອງເມືອງນັ້ນ

29 ໃນເອນຣິມໂມນ ໃນໂຊຣາ ໃນຢາຣ໌ມູທ

30 ຊາໂນອາ ອາດູນລາມ ແລະຊົນນະບົດຂອງເມືອງນັ້ນ ລາຄີສ ແລະໄຮ່ນາຂອງເມືອງນັ້ນ ອາເຊກາກັບຊົນນະ
ບົດຂອງເມືອງນັ້ນ ເຂົາຈຶ່ງຕັ້ງຄ້າຍຈາກເບເອີເຊບາເຖິງພູດອຍຮິນໂນມ

31 ປະຊາຊົນເບັນຢາມິນຢູ່ຕໍ່ຈາກເກບາໄປ ທີ່ມິກມັສ ທີ່ອັຍຢາ ທີ່ເບັນເອນ ແລະຊົນນະບົດຂອງເມືອງນັ້ນ

32 ທີ່ອານາໂທດ ໂນບ ອານານີຢາ

33 ຮາໂຊຣ໌ ຣາມາ ກິດຕາອິມ

34 ຮາດີດ ເຊໂບອິມ ເນບັນລັດ

35 ໂລດ ແລະໂອໂນ ພູດອຍຂອງພວກຊ່າງຝີມື

36 ແລະບາງສ່ວນຂອງຄົນເລວີຢູ່ໃນຢູດາກໍສົມທົບເຂົ້າກັບເບັນຢາມິນ

## 12 ບັນດາປະໂຣຫິດແລະຄົນເລວີ

A List of Priests and Levites

1 ຕໍ່ໄປນີ້ເປັນປະໂຣຫິດແລະຄົນເລວີທີ່ຂຶ້ນມາກັບເຊຣຸບບາເບນ ບຸດເຊອັນຕິເອນ ແລະເຢຊູອາ ເຊຣັຍຢາ ເຢເຣ
ມີຢາ ເອັຊຣາ

2 ອາມາຣີຢາ ມັນລຸກ ຮັດຕູສ

3 ເຊການີຢາ ເຣຮູມ ເມເຣໂມດ

4 ອິດໂດ ກິນເນທົວ ອາບີຢາ

5 ມີຢາມິນ ມາອາດີຢາ ບິນກາ

6 ເຊມັຍຢາ ຢົວອາຣິບ ເຢດັຍຢາ

7 ຊັນລູ ອາໂມກ ຮິນກີຢາ ເຢດັຍຢາ ຄົນເຫລົ່ານີ້ເປັນຫົວໜ້າຂອງປະໂຣຫິດ ແລະພີ່ນ້ອງຂອງເຂົາໃນສມັຍຂອງ
ເຢຊູອາ

8 ຄົນເລວີຄື ເຢຊູອາ ບິນນູຍ ກັດມີເອນ ເຊເຣບີຢາ ຢູດາ ແລະມັດຕານີຢາ ຜູ້ຊຶ່ງດູແລການເພງໂມທະນາພ້ອມ
ກັບພີ່ນ້ອງຂອງເຂົາ

9 ບາກບູກີຢາ ແລະອູນໂນພີ່ນ້ອງຂອງເຂົາ ຢືນຢູ່ກົງກັນຂ້າມໃນການບົວລະບັດ

10 ເຢຊູອາເປັນບິດາຂອງຢົວອາກິມ ຢົວອາກິມເປັນບິດາຂອງເອລີອາຊິບ ເອລີອາຊິບເປັນບິດາຂອງຢົວອາດາ

11 ຢົວອາດາເປັນບິດາຂອງໂຢນາທານ ແລະໂຢນາທານເປັນບິດາຂອງຢາດດູອາ

12 ໃນຣັຊການຢົວອາກິມ ມີປະໂຣຫິດຜູ້ເປັນຫົວໜ້າຕູກູນຄື ເຊຣັຍຢາ ມີ ເມຣັຍຢາ ຕະກູນເຢເຣມີຢາ ມີ ຮານາ
ນີຢາ

13 ຕະກູນເອັຊຣາ ມີ ເມຊູນລາມ ຕະກູນອາມາຣີຢາ ມີ ເຢໂຮຮານານ

14 ຕະກູນມັນລູຄີ ມີ ໂຢນາທານ ຕະກູນເຊບານີຢາ ມີ ໂຢເຊັບ

15 ຕະກູນຮາຣິມ ມີ ອັດນາ ຕະກູນເມຣາໂຢດ ມີ ເຮນກັຍ

16 ຕະກູນອິດໂດ ມີ ເຊຄາຣີຢາ ຕະກູນກິນເນໂທນ ມີເມຊູນລາມ

17 ຕະກູນອາບີຢາ ມີ ຊິກຣີ ຕະກູນມິນີອາມິນ ຕະກູນໂມອາດີຢາ ມີ ປີນຕັຍ

18 ຕະກູນບິນກາ ມີ ຊັມມູອາ ຕະກູນເຊມັຍຢາ ມີ ເຢໂຮນາທານ

19 ຕະກູນຢົວອາຣິບ ມີມັດເຕນັຍ ຕະກູນເຢດັຍຢາ ມີ ອູສຊີ

20 ຕະກູນຊັນລັຍ ມີກັນລັຍ ຕະກູນອາໂມກ ມີ ເອເບີ

21 ຕະກູນຮິນກີຢາ ມີ ຮາຊາບີຢາ ຕະກູນເຢດັຍຢາ ມີ ເນທານເອນ

22 ສ່ວນຄົນເລວີໃນສມັຍຂອງເອລີຢາຊິບ ຢົວອາດາ ໂຢຮານານ ແລະຢາດດູອາ ຊື່ຫົວໜ້າຂອງຕະກູນມີບັນທຶກໄວ້ທັງບັນດາປະໂຣຫິດຈົນເຖິງຣັຊສມັຍຂອງດາຣິອຸສ ຄົນເປີເຊັຽ

23 ເຊື້ອສາຍເລວີ ຫົວໜ້າຂອງຕະກູນ ມີບັນທຶກໄວ້ໃນໜັງສືພົງສາວະດານ ຈົນສມັຍຂອງໂຢຮານານ ບຸດເອລີອາຊິບ

24 ແລະຫົວໜ້າຂອງຄົນເລວີຄື ຮາຊາບີຢາ ເຊເຣບີຢາ ແລະເຢຊູອາ ບຸດກັດມີເອນ ກັບຍາດພີ່ນ້ອງຂອງເຂົາຢູ່ກົງກັນຂ້າມທີ່ຈະສັຣເສີນແລະໂມທະນາພຣະຄຸນ ຕາມບັນຍັດຂອງດາວິດຄົນຂອງພຣະເຈົ້າເປັນຍາມໆໄປ

25 ມັດຕານີຢາ ບາກບູກີຢາ ໂອບາດີຢາ ເມຊູນລາມ ຕັນໂມນ ແລະອັກກູບ ເປັນຄົນເຝົ້າປະຕູ ຢືນເຝົ້າຢູ່ທີ່ໂຮງພັສດຸຂອງປະຕູ

26 ຄົນເຫລົ່ານີ້ຢູ່ໃນສມັຍຂອງຢົວອາກິມ ບຸດເຢຊູອາ ຜູ້ເປັນບຸດໂຢຊາດາກ ແລະໃນສມັຍຂອງເນເຫມີຜູ້ວ່າຣາຊການ ກັບໃນສມັຍຂອງປະໂຣຫິດເອັຊຣາ ແລະທັມມາຈານ

**ການມອບຖວາຍກຳແພງເມືອງ**

Dedication of the City Wall

27 ເມື່ອທຳພິທີມອບຖວາຍກຳແພງເຢຣູຊາເລັມ ເຂົາໄດ້ສແວງຫາຄົນເລວີຕາມທີ່ຂອງເຂົາທົ່ວທຸກທິນທຸກແຫ່ງ ເພື່ອຈະນຳເຂົາມາທີ່ເຢຣູຊາເລັມ ເພື່ອສລອງມອບຖວາຍດ້ວຍຄວາມຍິນດີ ດ້ວຍການໂມທະນາ ແລະດ້ວຍການຮ້ອງເພງ ດ້ວຍແສ່ງ ພິນໃຫຍ່ ແລະພິນເຂົາຄູ່

28 ເຊື້ອສາຍພວກນັກຮ້ອງໄດ້ຮວມກັນມາຈາກມົນທົນຮອບເຢຣູຊາເລັມ ແລະຈາກຊົນນະບົດຂອງຊາວເນໂທຟາດ

29 ທັງມາຈາກເບັດກິນການ ແລະຈາກເຂດເກບາ ແລະອັສມາເວທ ເພາະບັນດານັກຮ້ອງໄດ້ສ້າງຊົນນະບົດຂອງຕົນຮອບເຢຣູຊາເລັມ

30 ບັນດາປະໂຣຫິດແລະຄົນເລວີໄດ້ຊຳຣະຕົວໃຫ້ບໍຣິສຸດ ແລະເຂົາທັງຫລາຍໄດ້ຊຳຣະປະຊາຊົນ ແລະປະຕູເມືອງກັບກຳແພງໃຫ້ບໍຣິສຸດ

31 ແລ້ວຂ້າພະເຈົ້າໄດ້ນຳເຈົ້ານາຍແຫ່ງຢູດາຂຶ້ນເທິງກຳແພງ ແລະແຕ່ງຕັ້ງໃຫ້ຄນະໃຫຍ່ສອງຄນະເປັນຜູ້ກ່າວໂມທະນາແລະເດີນເປັນຂະບວນແຫ່ ຄະນະນຶ່ງໄປທາງຂວາຂຶ້ນໄປເທິງກຳແພງຈົນເຖິງປະຕູກອງຂີ້ເຫຍື່ອ

32 ແລະຖັດຕໍ່ເຂົາໄປ ມີໂຮຊັຍຢາ ແລະເຈົ້ານາຍແຫ່ງຢູດາເຄິ່ງນຶ່ງ

33 ກັບອາຊາຣີຢາ ເອັຊຣາ ເມຊູນລາມ

34 ຢູດາ ເບັນຢາມິນ ເຊມັຍຢາ ແລະເຢເຣມີຢາ

35 ພວກປະໂຣຫິດບາງຄົນທີ່ມີແກ ຄື ເຊຄາຣີຢາ ບຸດໂຢນາທານ ຜູ້ເປັນບຸດເຊມັຍຢາ ຜູ້ເປັນບຸດມັດຕານີຢາ ຜູ້ເປັນບຸດມີກັຍຢາ ຜູ້ເປັນບຸດຊັກກູຣ໌ ຜູ້ເປັນບຸດອາສາບ

36 ກັບຍາດພີ່ນ້ອງຂອງເຂົາ ຄື ເຊມັຍຢາ ອາຊາເຣນ ມີລາລັຍ ກີລາລັຍ ມາອັຍ ເນທານເອນ ຢູດາ ແລະຮານານີ ພ້ອມກັບເຄື່ອງດົນຕຣີຂອງດາວິດຄົນຂອງພຣະເຈົ້າ ແລະເອັຊຣາທັມມາຈານໄດ້ເດີນນຳໜ້າ

37 ທີ່ປະຕູນ້ຳພຸ ເຂົາທັງຫລາຍເດີນຕົງໄປຂຶ້ນຂັ້ນໄດຂອງນະຄອນດາວິດ ທີ່ທາງຂຶ້ນກຳແພງເຫນືອພຣະຣາຊວັງ
ຂອງດາວິດເຖິງປະຕູນ້ຳທາງທິດຕາເວັນອອກ
38 ອີກຄນະນຶ່ງທີ່ກ່າວຄຳໂມທະນາເດີນໄປທາງຊ້າຍ ແລະຂ້າພະເຈົ້າຕາມເຂົາໄປພ້ອມກັບປະຊາຊົນເຄິ່ງນຶ່ງ ເທິງ
ກຳແພງເຫນືອຫໍຄອຍເຕົາໄຟເຖິງກຳແພງກວ້າງ
39 ແລະເຫນືອປະຕູເອຟຣາອິມ ແລະທາງປະຕູເກົ່າ ແລະທາງປະຕູປາ ແລະຫໍຄອຍຮານານເອນ ແລະຫໍຄອຍ
ຂອງຄົນນຶ່ງຮ້ອຍ ເຖິງປະຕູແກະ ແລະເຂົາມາຢຸດຢູ່ທີ່ປະຕູຍາມ
40 ຄນະທັງສອງຜູ້ກ່າວຄຳໂມທະນາໄດ້ມາຢືນຢູ່ທີ່ພຣະວິຫານຂອງພຣະເຈົ້າ ທັງຂ້າພະເຈົ້າແລະເຈົ້າຫນ້າທີ່ເຄິ່ງ
ນຶ່ງຢູ່ກັບຂ້າພະເຈົ້າ
41 ກັບປະໂຣຫິດທີ່ຖືແກ ຄື ເອລີອາກິມ ມາອາເຊຢາ ມານີອາມິນ ມີກັຍຢາ ເອລີໂອເອນັຍ ເຊຄານີຢາ ແລະຮາ
ນານີຢາ
42 ມາອາເຊຢາ ເຊມັຍຢາ ເອເລອາຊາ ອູສຊີ ເຢໂຮຮານານ ມັນຄີຢາ ເອລາມ ແລະເອເຊີ ແລະບັນດານັກຮ້ອງ
ໄດ້ຮ້ອງເພງ ມີ ເຢສຣາຮີຢາ ເປັນຫົວຫນ້າຂອງເຂົາ
43 ແລະເຂົາທັງຫລາຍໄດ້ຖວາຍເຄື່ອງສັດບູຊາໃຫຍ່ໂຕໃນວັນນັ້ນ ແລະຊົມຊື່ນຍິນດີເພາະພຣະເຈົ້າຊົງກະທຳໃຫ້
ເຂົາຍິນດີດ້ວຍຄວາມຊື່ນບານຍິ່ງໃຫຍ່ ພວກຜູ້ຍິງ ແລະເດັກນ້ອຍກໍຍິນດີດ້ວຍ ແລະຄວາມຊື່ນບານຂອງເຢຣູ
ຊາເລັມກໍໄດ້ຍິນໄປໄກ

**ການຈັດສ່ວນສິ່ງທີ່ລ້ຽງດູປະໂຣຫິດແລະຄົນເລວີ**

44 ໃນວັນນັ້ນ ເຂົາແຕ່ງຕັ້ງຄົນໃຫ້ດູແລຫ້ອງສຳລັບພັສດຸ ຂອງບໍຣິຈາກ ຫມາກໄມ້ຣຸ່ນແຮກນຶ່ງສ່ວນສິບ ໃຫ້ຮວບ
ຮວມສິ່ງຊຶ່ງກຳນົດໄວ້ໃນກົດຫມາຍສຳລັບປະໂຣຫິດ ແລະຄົນເລວີເຂົ້າມາໄວ້ໃນນັ້ນ ຕາມໄຮ່ນາໃນຫົວເມືອງ
ເຫລົ່ານັ້ນ
45 ເຂົາທັງຫລາຍໄດ້ທຳການບົວລະບັດພຣະເຈົ້າຂອງເຂົາແລະທຳການຊຳຣະໃຫ້ບໍຣິສຸດ ຢ່າງກັບພວກນັກຮ້ອງ
ແລະພວກເຝົ້າປະຕູໄດ້ກະທຳຕາມພຣະບັນຊາຂອງດາວິດແລະຂອງໂຊໂລໂມນຣາຊໂອຣົດຂອງພຣະອົງ
46 ເພາະໃນສມັຍດາວິດ ແລະອາສາບໃນດຶກດຳບັນນັ້ນມີຫົວຫນ້າພວກນັກຮ້ອງ ແລະມີບົດເພງສັຣເສີນ ແລະບົດ
ເພງໂມທະນາພຣະຄຸນພຣະເຈົ້າ
47 ແລະອິສຣາເອນທັງປວງໃນສມັຍຂອງເຊຣຸບບາເບນ ແລະໃນສມັຍຂອງເນເຫມີ ໄດ້ໃຫ້ປັນສ່ວນຕາມຕ້ອງ
ການທຸກວັນແກ່ນັກຮ້ອງແລະຄົນເຝົ້າປະຕູ ແລະເຂົາໄດ້ກັນສ່ວນຂອງຄົນເລວີໄວ້ຕ່າງຫາກ ແລະຄົນເລວີໄດ້
ກັນສ່ວນຂອງເຊື້ອສາຍອາໂຣນໄວ້ຕ່າງຫາ

## 13 ການປະຕິຮູບຂອງເນເຫມີ

Foreigners Separated from Israel

**(ຈຊຍ 22:1--24:25)**

1 ໃນວັນນັ້ນ ເຂົາອ່ານຫນັງສືຂອງໂມເຊໃຫ້ປະຊາຊົນຟັງ ແລະເຂົາພົບທີ່ມີຂຽນໄວ້ວ່າ ບໍ່ຄວນໃຫ້ຄົນອັມໂມນ
ຫລືຄົນໂມອາບເຂົ້າໃນທີ່ຊຸມນຸມຂອງພຣະເຈົ້າເປັນນິດ
2 ເພາະເຂົາບໍ່ໄດ້ເອົາອາຫານແລະນ້ຳມາຕ້ອນຮັບຄົນອິສຣາເອນ ແຕ່ໄດ້ຈ້າງບາລາອາມໃຫ້ມາຕໍ່ຕ້ານແລະສາບ
ແຊ່ງເຂົາ ແຕ່ພຣະເຈົ້າຂອງເຮົາຊົງປ່ຽນຄຳແຊ່ງເປັນພອນ
3 ແລະຢູ່ມາເມື່ອປະຊາຊົນໄດ້ຍິນທັມບັນຍັດ ເຂົາກໍແຍກອິສຣາເອນອອກເສັຽຈາກເຊື້ອສາຍຄົນຕ່າງດ້າວ

### The Reforms of Nehemiah

4 ກ່ອນຫນ້ານີ້ ປະໂຣຫິດເອລີອາຊີບຜູ້ໄດ້ຮັບການແຕ່ງຕັ້ງໃຫ້ດູແລຫ້ອງໃນພຣະວິຫານຂອງພຣະເຈົ້າຂອງເຮົາ
ແລະຜູ້ກ່ຽວພັນກັບໂຕບີອາ
5 ໄດ້ຈັດຫ້ອງໃຫຍ່ຫ້ອງນຶ່ງໃຫ້ໂຕບີອາ ເປັນຫ້ອງທີ່ແຕ່ກ່ອນໃຊ້ເກັບທັນຍາບູຊາ ກຳຍານ ເຄື່ອງໃຊ້ຕ່າງໆ ແລະ
ນຶ່ງສ່ວນສິບທີ່ເປັນເຂົ້າ ເຫລົ້າອະງຸ່ນໃຫມ່ແລະນໍ້າມັນ ຊຶ່ງເຂົາໃຫ້ໄວ້ຕາມບັນຍັດໃຫ້ແກ່ຄົນເລວີ ນັກຮ້ອງ ຄົນ
ເຝົ້າປະຕູ ແລະຂອງບໍຣິຈາກສໍາລັບປະໂຣຫິດ
6 ເມື່ອເກີດເຣື່ອງນີ້ຂ້າພະເຈົ້າບໍ່ໄດ້ຢູ່ໃນເຢຣູຊາເລັມ ເພາະໃນປີທີສາມສິບສອງແຫ່ງຣັຊການອາກຕາເຊີເຊສພ
ຣະຣາຊາແຫ່ງບາບີໂລນນັ້ນ ຂ້າພະເຈົ້າໄດ້ໄປເຝົ້າພຣະຣາຊາ ແລະຕໍ່ມາຂ້າພະເຈົ້າກໍທູນລາພຣະຣາຊາ
7 ແລະມາຍັງກຸງເຢຣູຊາເລັມ ແລ້ວຂ້າພະເຈົ້າຈຶ່ງຊາບຄວາມຊົ່ວຮ້າຍ ຊຶ່ງເອລີອາຊີບໄດ້ກະທຳເພື່ອໂຕບີອາ ຄື
ຈັດຫ້ອງພາຍໃນບໍຣິເວນພຣະວິຫານຂອງພຣະເຈົ້າໃຫ້ເຂົາ
8 ຂ້າພະເຈົ້າໃຈຮ້າຍຫລາຍ ແລະຂ້າພະເຈົ້າກໍໂຍນເຄື່ອງແຕ່ງເຮືອນທັງສິ້ນຂອງໂຕບີອາອອກເສັຽຈາກຫ້ອງ
9 ແລ້ວຂ້າພະເຈົ້າສັ່ງໃຫ້ເຂົາຊໍາຣະຫ້ອງ ແລະຂ້າພະເຈົ້າກໍນໍາເຄື່ອງໃຊ້ປະຈໍາພຣະວິຫານຂອງພຣະເຈົ້າ ທັງທັນ
ຍາບູຊາກັບກຳຍານກັບຄືນມາໄວ້ທີ່ນັ້ນອີກ
10 ຂ້າພະເຈົ້າຍັງຊາບອີກວ່າ ສ່ວນຂອງຄົນເລວີນັ້ນ ເຂົາກໍບໍ່ໄດ້ມອບໃຫ້ ເພາະສະນັ້ນ ຄົນເລວີແລະນັກຮ້ອງຜູ້ປະ
ຕິບັດການງານ ຕ່າງກໍຫນີກັບໄປຍັງໄຮ່ນາຂອງຕົນ
11 ຂ້າພະເຈົ້າຈຶ່ງຕໍ່ວ່າເຈົ້າຫນ້າທີ່ແລະເວົ້າວ່າ, “ເປັນຫຍັງຈຶ່ງປະປ່ອຍພຣະວິຫານຂອງພຣະເຈົ້າໄປ“ ຂ້າພະ
ເຈົ້າຈຶ່ງຮວບຮວມ ເຂົາກັບມາ ແລະຕັ້ງເຂົາໄວ້ຕາມຕໍາແຫນ່ງຂອງເຂົາອີກ
12 ແລະຢູດາທັງປວງໄດ້ນໍານຶ່ງສ່ວນສິບທີ່ເປັນເຂົ້າ ເຫລົ້າອະງຸ່ນໃຫມ່ ແລະນໍ້າມັນເຂົ້າມາຍັງເຮືອນພັສດຸ
13 ຂ້າພະເຈົ້າໄດ້ແຕ່ງຕັ້ງຄົນໃຫ້ດູແລເຮືອນພັສດຸ ຄື ປະໂຣຫິດເຊເລມີຢາ ຊາໂດກທັມມາຈານ ແລະເປດັຍຢາ
ແຫ່ງຄົນເລວີ ແລະຜູ້ຊ່ອຍຂອງເຂົາ ຄື ຮານານ ບຸດຊັກກູຣ໌ ຜູ້ເປັນບຸດມັດຕານີຢາ ເພາະນັບໄດ້ວ່າເຂົາຊື່ສັດ
ແລະຫນ້າທີ່ຂອງເຂົາຄືແຈກຈ່າຍແກ່ພວກພີ່ນ້ອງ
14 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ກ່ຽວກັບເຣື່ອງນີ້ຂໍຊົງລະນຶກເຖິງຂ້າພຣະອົງ ແລະຂໍຢ່າຊົງລຶບລ້າງການທີ່ດີທັງ
ຫລາຍຂອງຂ້າພຣະອົງທີ່ຂ້າພຣະອົງໄດ້ກະທໍາ ເພື່ອພຣະວິຫານຂອງພຣະເຈົ້າຂອງຂ້າພຣະອົງ ແລະເພື່ອການ
ບົວລະບັດໃນທີ່ນັ້

### Sabbath Reforms Begun

15 ຄັ້ງນັ້ນໃນຢູດາ ຂ້າພະເຈົ້າເຫັນຄົນຍໍ່າເຫລົ້າອະງຸ່ນໃນວັນສະບາໂຕ ແລະນໍາຟ່ອນເຂົ້າເຂົ້າມາບັນທຸກຫລັງລໍ
ທັງເຫລົ້າອະງຸ່ນ ຫມາກອະງຸ່ນ ຫມາກເດື່ອ ແລະພາຣະທຸກຢ່າງ ຊຶ່ງເຂົານໍາມາຍັງເຢຣູຊາເລັມໃນວັນສະບາໂຕ
ຂ້າພະເຈົ້າໄດ້ຕັກເຕືອນເຂົາໃນວັນທີ່ເຂົາທັງຫລາຍຂາຍອາຫານ
16 ແລະມີຄົນຊາວຕີເຣໄດ້ອາສັຍຢູ່ໃນເມືອງໄດ້ນໍາປາ ແລະສິນຄ້າທຸກຢ່າງເຂົ້າມາຂາຍໃນວັນສະບາໂຕແກ່ປະ
ຊາຊົນຢູດາ ແລະໃນເຢຣູຊາເລັມ
17 ແລ້ວຂ້າພະເຈົ້າໄດ້ຕໍ່ວ່າພວກຂຸນນາງແຫ່ງຢູດາ ແລະເວົ້າກັບເຂົາວ່າ, “ເປັນຫຍັງທ່ານທັງຫລາຍກະທໍາຄວາມ
ຊົ່ວຮ້າຍເຊັ່ນນີ້ ກະທໍາໃຫ້ວັນສະບາໂຕເປັນມົນທິນ
18 ບັນພະບຸຣຸດຂອງທ່ານບໍ່ໄດ້ກະທໍາເຊັ່ນນີ້ຫລື ແລະພຣະເຈົ້າຂອງເຮົາບໍ່ໄດ້ຊົງນໍາເຫດຮ້າຍນີ້ທັງສິ້ນໃຫ້ຕົກຢູ່
ເທິງເຮົາແລະເທິງເມືອງນີ້ຫລື ທ່ານຍັງຈະນໍາພຣະພິໂຣດຍິ່ງກວ່ານັ້ນມາເຫນືອອິສຣາເອນດ້ວຍການກະທໍາໃຫ້
ສະບາໂຕເປັນມົນທິນ

19 ແລະຢູ່ມາພໍເລີ້ມມືດທີ່ປະຕູເມືອງເຢຣູຊາເລັມກ່ອນວັນສະບາໂຕ ຂ້າພະເຈົ້າໄດ້ສັ່ງໃຫ້ປິດປະຕູເມືອງ ແລະສັ່ງ
ວ່າບໍ່ໃຫ້ເປີດຈົນກວ່າຈະພົ້ນວັນສະບາໂຕແລ້ວ ແລະຂ້າພະເຈົ້າກໍຕັ້ງຂ້າຣາຊການບາງຄົນຂອງຂ້າພະເຈົ້າໃຫ້ດູ
ແລປະຕູເມືອງ ວ່າບໍ່ໃຫ້ນຳພາຣະສິ່ງໃດເຂົ້າມາໃນວັນສະບາໂຕ
20 ແລ້ວພວກພໍ່ຄ້າແລະພວກຂາຍສິນຄ້າທຸກຊະນິດຄ້າງຢູ່ນອກເຢຣູຊາເລັມເທື່ອນຶ່ງ ຫລືສອງເທື່ອ
21 ຂ້າພະເຈົ້າໄດ້ຕັກເຕືອນເຂົາ ແລະເວົ້າກັບເຂົາວ່າ, “ເປັນຫຍັງທ່ານມານອນຢູ່ຂ້າງກຳແພງເມືອງ ຖ້າທ່ານທຳ
ອີກຂ້າພະເຈົ້າຈະຈັບທ່ານ” ຕັ້ງແຕ່ຄັ້ງນັ້ນມາເຂົາກໍບໍ່ມາອີກໃນວັນສະບາໂຕ
22 ຂ້າພະເຈົ້າສັ່ງຄົນເລວີໃຫ້ຊຳຣະຕົວເຂົາແລະມາເຝົ້າປະຕູເມືອງ ເພື່ອຮັກສາວັນສະບາໂຕໃຫ້ບໍຣິສຸດ ຂ້າແດ່ພ
ຣະເຈົ້າຂອງຂ້າພຣະອົງ ຂໍພຣະອົງຊົງຣະລຶກເຖິງຄວາມຊອບຂອງຂ້າພຣະອົງໃນເຣື່ອງນີ້ ແລະຂໍຊົງໄວ້ຊີວິດຂ້າ
ພຣະອົງຕາມຄວາມຍິ່ງໃຫຍ່ແຫ່ງຄວາມຮັກຫມັ້ນຄົງຂອງພຣະອົງ

Mixed Marriages Condemned

(ອຊຣ 9:1-4)

23 ໃນສມັຍນັ້ນຂ້າພະເຈົ້າໄດ້ເຫັນພວກຢິວຜູ້ໄດ້ແຕ່ງງານກັບຍິງຊາວອັສໂດດ ອັມໂມນ ແລະໂມອາບ
24 ແລະເດັກຂອງເຂົາເຄິ່ງນຶ່ງເວົ້າພາສາອັສໂດດ ເຂົາເວົ້າພາສາຢູດາບໍ່ໄດ້ ແຕ່ເວົ້າພາສາຊົນຊາດຂອງເຂົາແຕ່
ລະພວກ
25 ຂ້າພະເຈົ້າໄດ້ໂຕ້ແຍ້ງກັບເຂົາ ແລະແຊ່ງເຂົາ ແລະຕີເຂົາບາງຄົນ ແລະດຶງຜົມຂອງເຂົາອອກ ແລະຂ້າພະເຈົ້າ
ກະທຳໃຫ້ເຂົາສາບານໃນພຣະນາມຂອງພຣະເຈົ້າ ດ້ວຍຂ້າພະເຈົ້າກ່າວວ່າ “ເຈົ້າທັງຫລາຍຢ່າຍົກບຸດຍິງຂອງ
ເຈົ້າໃຫ້ແກ່ບຸດຊາຍຂອງເຂົາ ຫລືຮັບບຸດຍິງຂອງເຂົາໃຫ້ແກ່ບຸດຊາຍຂອງເຈົ້າ ຫລືຕົວເຈົ້າເອງ
26 ໂຊໂລໂມນພຣະຣາຊາແຫ່ງອິສຣາເອນ ບໍ່ໄດ້ທຳບາບດ້ວຍເຣື່ອງຍິງຢ່າງນີ້ຫລື ຖ້າມກາງຫລາຍປະຊາຊາດ ບໍ່
ມີພຣະຣາຊາໃດເຫມືອນພຣະອົງ ແລະພຣະເຈົ້າຂອງພຣະອົງກໍຊົງຮັກພຣະອົງ ແລະພຣະເຈົ້າຊົງກະທຳໃຫ້ພ
ຣະອົງເປັນກະສັດເຫນືອ
ອິສຣາເອນທັງປວງ ເຖິງປານນັ້ນກໍດີ ເມັຽທັງຫລາຍທີ່ເປັນຍິງຕ່າງຊາດກໍເປັນເຫດໃຫ້ພຣະອົງຊົງທຳບາບ
27 ຄວນຫລືທີ່ເຮົາຈະຟັງເຈົ້າ ແລະກະທຳຄວາມຊົ່ວຮ້າຍຍິ່ງໃຫຍ່ນີ້ທັງສິ້ນ ແລະປະພຶດທໍຣະຍົດຕໍ່ພຣະເຈົ້າຂອງ
ເຮົາດ້ວຍການແຕ່ງງານກັບຍິງຕ່າງຊາດ”
28 ບຸດຊາຍຄົນນຶ່ງຂອງເຢຮົວອາດາ ຜູ້ເປັນບຸດປະໂຣຫິດເອລີອາຊິບ ເປັນບຸດເຂີຍຂອງຊານບັນລັດ ຊາວໂຮໂຣນ
ເຫດສັນນັ້ນຂ້າພະເຈົ້າຈຶ່ງຂັບໄລ່ເຂົາໄປເສັຽຈາກຂ້າພະເຈົ້າ
29 ຂ້າແດ່ພຣະເຈົ້າຂອງຂ້າພຣະອົງ ຂໍຊົງຣະລຶກເຖິງເຂົາທັງຫລາຍ ເພາະວ່າເຂົາທັງຫລາຍໄດ້ກະທຳໃຫ້ການເປັນ
ປະໂຣຫິດ ແລະຄຳສັນຍາຂອງພວກປະໂຣຫິດແລະຄົນເລວີເປັນມົນທິນ
30 ດັ່ງນີ້ແຫລະ ຂ້າພະເຈົ້າໄດ້ຊຳຣະເຂົາຈາກຕ່າງດ້າວທຸກຢ່າງ ແລະຂ້າພະເຈົ້າໄດ້ຕັ້ງຫນ້າທີ່ຂອງບັນດາປະໂຣ
ຫິດແລະຄົນເລວີຕ່າງກໍປະຈຳງານຂອງຕົນ
31 ຂ້າພະເຈົ້າໄດ້ຈັດໃຫ້ຫາຟືນຖວາຍຕາມເວລາກຳນົດ ແລະສຳລັບຜົນຣຸ່ນແຣກ ຂ້າແດ່ພຣະເຈົ້າຂອງຂ້າພຣະ
ອົງ ຂໍຊົງລະ ນຶກເຖິງຂ້າພຣະອົງໃຫ້ເກີດຜົນດີເຖີດ